ກອບລ່າ

# ຍ່າງສອງຂາ ເອົາຕາໄປກ່ອນ


ໂດຍ

ສ. ເດຊາ

ກອນລຳ

# ຜ່າງສອງຂາ
# ເອົາຕາໃປກ່ອນ

ໂດຍ

ສ. ເດຊາ

ພິມເທື່ອທີ II

ສຳນັກພິມ ແລະຈຳໜ່າຍປື້ມແຫ່ງລັດ ສ.ປ.ປ.ລາວ

ວຽງຈັນ 1992

ຄະນະຈັດທຳເທື່ອທີ 2

- ບຸນຊູ ພັນທະວີໄຊ
- ບຸນນອງ ໄຊຍະເສນ

ດັດແກ້ມາແກັດ ອຳພາ

ໜ້າປົກແຕ້ມໂດຍ ຄຳເພັດ

ອພ 160/ສພປ

ທບ 258/ພປ 170692

ພິມທີ່ໂຮງພິມຊາວໜຸ່ມ

ຈຳນວນ 2000 ຫົວ, ຂະໜາດ 13×19ຊມ

# ຄຳນຳ

ຕັ້ງແຕ່ປີ1982 "ຢ່າງສອງຂາ ເອົາຕາໄປກ່ອນ" ທີ່ຜູ້ ແຕ່ງຢາກສະແດງ ໃຫ້ເຫັນວ່າ"ບັນຫາປະຊາທິປະໄຕ" ຕ້ອງມີ 3ປັດໄຈເປັນເອກະພາບແຍກຈາກກັນບໍ່ໄດ້. ຄື: ປັດໄຈຮວມສູນ, ປັດໄຈ ປະຊາທິປະໄຕແລະປັດໄຈສັດຈະທຳຍຸກສະໄໝ ປະກອບເຂົ້າກັນ ຢ່າງສົມດຸນຈຶ່ງຈະເປັນປະຊາທິປະໄຕໄດ້ຢ່າງແທ້ຈິງ. ໝາຍຄວາມວ່າປະຊາທິປະໄຕຕ້ອງມີການຈັດຕັ້ງອັນສອດຄ່ອງ, ມີແນວທາງແລະການນຳອັນຖືກຕ້ອງນັ້ນເອງ. ໜັງສືກອນລຳດັ່ງກ່າວ ໄດ້ຂາດຕະຫລາດ ຈຳໜ່າຍເປັນເວລານານ. ແຕ່ເນື່ອງຈາກນັກອ່ານ, ນັກຄົ້ນຄວ້າ. ຍັງມີຄວາມຕ້ອງການ, ມີຜູ້ຊອກຫາຖາມເຖິງແລະ ໄດ້ສະເໜີໃຫ້ ພວກເຮົາຈັດພິມຈຳໜ່າຍອີກ.

ດັ່ງນັ້ນ, ເພື່ອຕອບສະໜອງກັບຄວາມຕ້ອງການດັ່ງກ່າວ ພວກເຮົາຈຶ່ງ ໄດ້ຂໍອະນຸຍາດຈາກຜູ້ແຕ່ງ ຊຶ່ງ ໄດ້ມີການດັດແປງດ້ານ ສຳນວນ. ວັກຕອນ ແລະສັບຄຳບາງເລັກນ້ອຍເພື່ອໃຫ້ເໝາະສົມກັບອາລົມແລະຈິດໃຈຂອງບົດກອນຈຳນວນໜຶ່ງແລ້ວ ໄດ້ຈັດພິມເປັນເທື່ອ ທີສອງຊຶ່ງຫວັງວ່າຈະ ໄດ້ຮັບການຕຳໜິຕິຊົມໃນໂອກາດຕໍ່ໄປ. ຫາກທ່ານມີຄຳຄິດຄຳເຫັນປະການໃດເຊີນສົ່ງຈົດໝາຍເຖິງສຳນັກ ພິມແລະຈຳໜ່າຍປຶ້ມແຫ່ງລັດ ຕູ້ ປ.ນ.1300 ວຽງຈັນ, ສ ປ ປ ລາວ ໂທລະສັບ 3402,3403,3783,2136.

ໂດຍຄວາມນັບຖື.

ສຳນັກພິມແລະຈຳໜ່າຍປຶ້ມແຫ່ງລັດ ສ.ປ.ປ.ລາວ

# ຍ່າງສອງຂາ
# ເອົາຕາໄປກ່ອນ

ກ້າວເລີຍ! ກ້າວເດີນ!
ກ້າວຍ່າງສອງຂາ ເອົາຕາໄປກ່ອນ
ສອງມືແອ່ນຟ້ອນ ຕີນປ່ຽນສາມປະຕູ
ໜີກປາແດກກໍ່ມີດູ ຈີປູກໍມີວາດ
ນັກປາດມີອາຈານ ເມື່ອແບ່ງວຽກຕ້ອງໂຮມງານ
ປາກໄວໃຫ້ຄານປາກນານໃຫ້ແລ່ນ ນັ້ນແມ່ນແກ່ນບັນຫາ
ການສຶກສາວັດທະນະທຳ ຕ້ອງໃສ່ໃຈຈືດຈຳ
ຟ້າວເຮັດຟ້າວທຳ ຟ້າວຮ່ຳຟ້າວຮຽນ
ພາກພຽນຝຶກຝົນ ສູ້ທົນທື້ນດຶງ !
ຍູ້ໄປກ່ອນກ້າວໜຶ່ງ ໃຫ້ມັນໄດ້! ໃຫ້ມັນໄດ້!!!

× ×

×

"ຕີນທາງມີສອງເສັ້ນ ຕາມໃຈຊິເລືອກໄດ່ ເອົາເນີ
ນັກເສັ້ນເວງ ທາງລ້ຽວກໍ່ຫາກມີ"
ນັ້ນແມ່ນຄຳກະວີ ລືບບໍ່ສູນສານໃຈ້
ຄືນບູຮານຂຽນໄວ້ ມີຊື່ລືຊາ
ລາວເຮົາປາຖະໜາ ດຸ່ງເດີນທາງລ້ຽວ
ເພີ່ນວ່າທ່ຽວທາງເວັ້ງ ເຫີງຫລາຍມັນຊິຄ່ຳ

ມັນຈິປິດຈິດຈຳຫຳໃຫ້ລາວຈັກຈ້າ    ເປັນຂ້າຕະຫລອດການ
ດັ່ງນັ້ນ, ໃຜກໍ່ມັກເສັ້ນລ້ຽວ    ຫລຽວຫ່ອງທາງລັດ.

ຕັດໄປເຊິງຈຸດໝາຍ    ວ່ອງໄວແວນຟ້າວ
ວົງໂຄຈອນທັນກ້າວ    ຕາມທາງປະຫວັດສາດ
ຊຸດົມການໃຕ່ຍກ້າວ    ໝາຍໝັ້ນໄຟຝັນ
ຢາກໄປຮອດບ່ອນນັ້ນ    ມັນເປັນສິງທຳມະດາ
ລົມ ຕ້ອງຍ່າງສອງຂາ    ເອົາຕາໄປກ່ອນ
ພ້ອມທັງສອງມືຟ້ອນ    ທັນປ່ຽນສານປະການ
ຢາກຮອດໄວເພີນໃຫ້ຄານ    ຢາກຊ້າບານເພີນໃຫ້ແລ່ນ
ຄຳເວົ້ານີ້, ມັນຈຸຜິດຫລືແມ່ນ    ໃຫ້ຄົ້ນຄ້ວາສຶກສາ
ຕ້ອງພິຈາລະນາ    ໃຫ້ລະອຽດຖີ່ຖ້ວນ
ບໍ່ແມ່ນເວົ້າຟັງມ່ວນ    ລົມເປົ່າກາຍຫູ

"ໝົກປາແດກກໍ່ມີດູ    ຈີປູກໍ່ມີວາດ"
ຂໍໃຫ້ນັກປາດເຈົ້າ    ຈຳໄວ້ຢ່າຫລົງ.

ຢ່າລືມວ່າ, ດຽວນີ້ລາວພວມສ້າງ    ລະບອບໃຫມ່ສົດໃສ
ພວມຈະເດີນທາງໄປ    ສູ່ຄວາມຈະເລີນກ້າວ
ລາວໄດ້ກຳກົງແກ້ວ    ຜະເດັດການກຳນະຈິບ
ເປັນລະບົບແກ່ນກ້າ    ສາມໜ້າໜຶ່ງປັນຫາ

ນັ້ນແມ່ນ: ພັກນຳພາ, ລັດຄຸ້ມຄອງ    ປະຊາຊົນເປັນເຈົ້າ
ອັນນັ້ນ ຖ້າຈີເວົ້າ    ປຽບທຽບອຸປະມາ
ກໍຄືຍ່າງສອງຂາ    ເອົາຕາໄປກ່ອນ
ເວົ້າໃນບ່ອນ    ວ່າພັກນຳພາ

ປຽບເໝືອນດັ່ງແສງຕາ    ເບີອງທາງຮອບດ້ານ
ເບີອງໃຫ້ສອງຂາຍ່າງ    ຖືກຕ້ອງຕາມຄອງ
ສ່ວນວ່າຂາທັງສອງ    ກໍ່ແຂງແຮງຕື່ງໆ
ຂາທີໜຶ່ງ    ແມ່ນລັດຄຸ້ມຄອງ
ຂາທີສອງ    ປະຊາຊົນເປັນເຈົ້າ
ຈະເດີນທາງຂຶ້ນເຕົ້າ    ຮ່ວມຍຸກສະໄໝ
ປະເທດລາວສີວິໄລ    ຮຸ່ງເຮືອງເຫລືອງເຫລື້ອມ
ປີ້ມຍາມສຸມເສືອມ    ເທົ້າທີ່ວິນລີນດອນ.
ລະຫວ່າງຂາທັງສອງ    ປະສານກັນຍ້າຍຍ່າງ
ປະສານກັນລະຫວ່າງ    ໝູ່ຄະນະກັບບຸກຄົນ
ລະຫວ່າງລັດກັບປະຊາຊົນ    ແມ່ນສອງຂາຄຽງຄູ່
ຂາໜຶ່ງຢືນຢັ້ນຢູ    ຂາໜຶ່ງກ້າວໄປ.
ນໍ້າຂຶ້ນພຽງໃດ    ດອກບົວກໍ່ພຽງນັ້ນ
ສອງລະບົບຈັດຕັ້ງ    ແມ່ນສອງເຫດກັບຜົນ
ໃນເມື່ອປະຊາຊົນ    ຕື່ນຕົວກ້າວໜ້າ
ອຳນາດລັດກໍ່ແກ່ນກ້າ    ສາມາດນຳພົນ.
ປະໂຫຍດໃຫ້ປະຊາຊົນ    ໄດ້ດີຍິ່ງຂຶ້ນ
ເມື່ອໄດ້ດີເທົ່າໃດ, ປະຊາຊົນກໍຍິ່ງຕື່ນ    ຕໍ່ສູ້ຊີງຊອງ
ອຳນາດການປົກຄອງ    ກໍ່ເຂັ້ມແຂງຮອບດ້ານ
ຍິ່ງເຂັ້ມແຂງ, ກໍຍິ່ງສາມາດຕ້ານ    ທຸກກົນອຸບາຍ.
ຂອງສັດຕູ ທີ່ຈະມາທຳລາຍ    ປະຊາຊົນເປັນເຈົ້າ
ພວກເຮົາສາມາດເວົ້າ    ຢ່າງກົງໄປກົງມາ

ຄົນບໍ່ຍ່າງສອງຂາ ແມ່ນໄປໃສບໍ່ຮອດ
ຍ່າງສອງຂາ, ແຕ່ວ່າຕາມືດບອດ ກໍ່ບໍ່ຮອດຄືກັນ.

ອີກຢ່າງໜຶ່ງ, ຄົນເອົາຕາໄວ້ທາງຫລັງ ເອົາຂາຍ່າງ ໄປທາງໜ້າ
ເຮັດແນວນັ້ນ, ກໍ່ອາດໄດ້ເວົ້າວ່າ ສຸດທີ່ອັນຕະລາຍ
ມັນຊິຕຳຕໍຕາຍ ຕົກເຫວຫົວແຕກ
ສາມປັດໃຈ, ແມ່ນບໍ່ອາດຕັດແຍກ ປຽບຄືດຽງສາມຂາ.

ແມ່ນກົດເກນທຳມະດາ ປະຕິເສດບໍ່ໄດ້
ຄົນເຮົາໄປທາງໜ້າ ແມ່ນເອົາຕາໄປກ່ອນ
ຂາທັງສອງຈຶ່ງຄ່ອຍຄະເຄື່ອນຍ້າຍ ຂວາຊ້າຍໄຕ່ທາງ
ແຂນທັງສອງຟາກຂ້າງ ຖຸ້ມທ່ວງເອົາກຳລັງ

ເດີນສອງຂາດ້ວຍທ່າທາງທັນມັງ ຢາກເຮັດຫຍັງກໍເຮັດໄດ້
ມີປະຊາທິປະໄຕ, ມັນຕ້ອງມີທັງເບື້ອງ ຮວມສູນສິດອຳນາດ
ຂາດອັນໃດກໍບໍ່ໄດ້ ສອງກ້ຳເກິ່ງກັນ
ຄົນບໍ່ມີເບື້ອງນັ້ນ ກໍບໍ່ມີເບື້ອງນີ້ ສຸດທີ່ທຳມະດາ

ຂາດເບື້ອງໜຶ່ງແມ່ນບໍ່ມີຈັກຂາ ຄວາມຈິງເວົ້າແທ້
ມັນຈະມີພຽງແຕ່ ອຳນາດອາດຍາ
ອຳນາດບໍ່ມີຂາ ມີແຕ່ພຸງກັບໄສ້
ແມ່ນອຳນາດປຸ່ມໃຫຍ່ ຂອງນາຍທຶນສັກດີນາ

ມີທ້ອງບໍ່ມີຂາ ມັນຜິດທຳມະຊາດ
ໃຜຊິອາດສາມາດ ເອົາທ້ອງຍ່າງໄປເປັນ
ເພາະສະນັ້ນ ຄົນຫາກມີແຕ່ເຫັນ ການປົກຄອງອ້ອຍຕ້ອຍ

ບໍ່ຫົວຊາຈັກໜ່ອຍ ເຖິງປະຊາທິປະໄຕ
　　ມີແຕ່ອິງອາໃສ ນຳລະບອບຫົວໜ້າ
ພົດຕຶກຊຶກບ່ອນວ່າ ເອົາໄມ້ນ້ອຍລຳດຽວ
ໄປລ້ອມຮົ້ວໄຮ່ນາໃນເວລາເຂົ້າຂຽວ ບໍ່ໃຫ້ງົວຄວາຍລ່ວງ
ໝູ່ສະນະ ອາດຈະຕົກໃນຫ່ວງ ເສນາໝາກຂ໊ກາ
　　ບໍ່ໄດ້ໃຊ້ປືນຢາ ຫົວຄິດປະດິດສ້າງ
ເປັນແນວນັ້ນ ມັນກໍບໍ່ແຕກຕ່າງ ກັນກັບພະດົງຕົນ
ອາດຈະເປັນຄືກັນ ກັບນິທານເພິ່ນເວົ້າ
ຕັ້ງແຕ່ປາງກ່ອນເກົ່າ ບໍ່ຮູ້ວ່າສະໄໝໃດ
　　ເພິ່ນເວົ້າວ່າເຈົ້າພະຍາຢາກທົດລອງຈິດໃຈ ເສນາອາມາດ
ຈະເປັນຄົນສະຫລາດ ຫລືໂງ່ຊ້າພຽງໃດ
ເຈົ້າພະຍາຈຶ່ງໄຮ ຮຽກປະຊຸມພ້ອມພາດ
ຢູ່ຕໍ່ໜ້າພວກເສນາອາມາດ ມີໝາກໄມ້ຕົ້ນພາ
　　ແມ່ນແຕ່ໝາກຂ໊ກາ ສຸກແດງເຕັມທີ
ໃຜກໍຮູ້ແລ້ວຕິ! ແນວໝາກຂ໊ກາ
ມັນມີຊື່ ລືຊາ ທາງຂົມທາງຂື່ນ
ເຈົ້າພະຍາຍົກຍື່ນ ຢາຍໃຫ້ເສນາ
　　ສ່ວນວ່າເຈົ້າພະຍາ ກິນໝາກກ້ຽງນ້ອຍ
ກິນແລ້ວວ່າແຊບຊ້ອຍ ສຸດທິຫອມຫວານ
ຫລັງຈາກນັ້ນກໍຖາມ ເສນາໃຫ້ຄັກຄ໊ວ
ພວກເສນາພາກັນເຮັດໜ້າຫົວ! ປານວ່າກິນຢາ
　　ກັດກິນໝາກຂ໊ກາ ບາງຄົນກໍຈົ່ມຮາກ !

ໝາກຂ໌ກາພິພາກ ລື້ນເຄືອເຂົາຮໍ

ພວກເສນາອິດສາກິນລິງຄໍ ວ່າໂດຍຂ້ານ້ອຍ

ຈຶ່ງແມ່ນຄວາມແຊບຊ້ອຍ ປານວ່າອ້ອຍແສນສວນ.

ທັງມີກັນຫອມຫວນ ປານວ່າສວນແສນດອກ

ເມື່ອໄດ້ຟັງຄຳບອກ ຂອງພວກເສນາ

ເປັນອັນວ່າພະຍາ ໄດ້ຮູ້ຈັກຄັກແຈ້ງ

ໄດ້ສິ່ງປົດຕຳແໜ່ງ ກັນໂລດທັນທີ.

ອັນນັ້ນເປັນຄະຕິ ເຕືອນໃຈມາແຕ່ເກົ່າ

ບໍ່ມີສິດເປັນເຈົ້າ ຄືເສນາໝາກຂ໌ກາ

ມີເປັນລ້ານເປັນແສນກໍ່ບໍ່ເປັນຮາກຢາ ພິຍັບພິຍອດ

ຄືຫົວລ້ານຕາບອດ ແຍງແວ່ນຫວີຜົມ.

ຜົມບໍ່ມີກໍ່ວົ້ມ ຫວີຫົວລ້າງ

ດັ່ງນັ້ນ, ໃຜຈີ່ເກັ່ງຊີ້ການສືບແສນຫົວໜ້າບໍ່ມີຕາປະສານງານ, ມັນ ກໍ່

ຄືນິທານຕາບອດເບິ່ງຊ້າງ

ຜູ້ໄປງົມເບິ່ງຂ້າງ ກໍ່ວ່າຊ້າງຄືຝາ

ຜູ້ໄປງົມເບິ່ງຂາ ກໍ່ວ່າຊ້າງຄືສຸບ.

ຜູ້ທີ່ເອົາມືລູບ ໄປຖືກຫູພິດ

ກໍ່ວ່າຊ້າງຄື ວີ ມີຢູ່ວາບໆ

ມີຄວາມເຫັນບໍ່ເປັນເອກະພາບ ຕ່າງຄືນຕ່າງດູ

ຜູ້ໄປງົມຖືກງວງກໍ່ວ່າຊ້າງຄືງູ ຍ້ອນບໍ່ເຫັນຮອບດ້ານ.

ດັ່ງນັ້ນ ເມື່ອບໍ່ຜ່ານ ວຽກປະຊາທິປະໄຕ

ມັນກໍອາດເປັນໄປ ຄືນິທານເພິ່ນເວົ້າ

ດັ່ງຄົນເຮົາມີແຕ່ຫົວກັບໜ້າບໍ່ມີຫູມີຕາ ມັນໂລດເປັນເລື່ອງໃຫຍ່
ຢາກຟັງລໍາກໍ່ບໍ່ໄດ້ ຊິຕໍາໄມ້ກໍ່ບໍ່ເຫັນ.

ກົງກັນຂ້າມ ຖ້າຫາກມີແຕ່ເນັ້ນ ປະຊາທິປະໄຕ
ແບບບໍ່ມີວິໄນ ກົດໝາຍແມ່ນເວົ້າລ້າ
ຄົນປະຊາທິປະໄຕແບບບໍ່ມີຫົວໜ້າ ມີແຕ່ຫູກັບຕາ ມັນກໍ່ ເປັນ
ເລື່ອງຕ່າງ
ຍົກຕົວຢ່າງທ້າວກະທໍ! ນາງໝໍ້ຂາງ! ຫູກໍ່ຫລາຍຕາກໍ່ລົ້ນ ຄົນເອັ້ນ
ກໍ່ບໍ່ຫລຽວ !

ດັ່ງນັ້ນ ຄົນມີແຕ່ຊຸ້ນຂ້ຽວ ເປີດປະຊາທິປະໄຕ
ແບບບໍ່ມີວິໄນ ກົດໝາຍຂອບເຂດ
ມັນກໍ່ມາເກີດເຫດ ຕີກັນຈໍ້າຫົວພຽງກັນ
ໃຜກໍ່ພໍໃຜມັນ ເວົ້າກັນບໍ່ໄດ້.

ເຈົ້າກໍ່ເປັນນາຍໃຫຍ່ ຂ້ອຍກໍ່ເປັນອາດຍາ
ຢ່າມາເວົ້າມາຈາ ຂ້ອຍມີສິດເປັນເຈົ້າ
ແລ້ວກໍ່ແຍກກັນອອກຢູ່ເປັນກົກເປັນເລົ່າ ພັກພວກເສລີ
ໝົ້ນເຄີຍເກີດມີ ໃນບາງປະເທດ.

ຢູ່ໃນບາງຂອບເຂດ ບວກນໍ້າລົງປາ
ຊິເປັນໜອງເປັນນາ ຂອງໃຜບໍ່ເວົ້າ
ຂ້ອຍມີສິດເປັນເຈົ້າ ຊິລົງຜ່າຕາມໃຈ
ໃຜກໍ່ເອົາພໍໃຈ ຍາດຊີງກັນສູ້.

ຕ່າງພັກພວກຕ່າງໝູ່ ເດີນໄປສູ່ຕົວຈີງ
ປານວ່າລີງກັບລີງ ຊີງກັນຂຶ້ນໄມ້

ພົນສຸດທ້າຍກໍ່ໄດ້ແກ່ອ້າຍໃຫ່ຍ ຊຸມບັກໂກກນາໂຖ
ກ້າວໄປຮອດບ່ອນໂຕ ວີເວີນເປັນພະເຈົ້າ.
ເພີນຈຶງມີຄຳເວົ້າ ວ່າລັດທິທຶນນິຍົມ
ສ່ວນວ່າປະຊາຊົນ ປຽບຄືປາຂັງຂອງ
ຊື່ວ່າປາເສລີ ມີສິດເຕັ້ນສິດດ່ອງ ພໍໃຜພໍມັນ
ພົນສຸດທ້າຍກໍ່ທັນ ລົງຫາປາກໜໍ້.
ຖາມວ່າຍັງອີກບໍ່ ຈິເຕັ້ນດ່ອງໄປໃສ?
ນັ້ນແມ່ນແບບປະຊາທິປະໄຕ ນາຍທຶນກຳອຳນາດ
ແບບລາຊາທິລາດ ລ້ວນແຕ່ແມ່ນເອກະຊົນ
ດັ່ງນັ້ນເມື່ອຢາກເດີນໄດ້ຜົນ ຢ່າງບໍ່ມີຜິດພາດ.
ທັງສອງຂານີ້ພາລະບົດບາດ ຕຳແໜ່ງໃຜມັນ
ຕ້ອງປະສານພົວພັນ ນຳກັນໃຫ້ຖືກທ່າ
ທາງລະບອບຫົວໜ້າ ອຳນາດປົກຄອງ
ແມ່ນຈະມີຫລາຍຮອງ ສອງສາມກໍ່ຢ່າ.
ລະຫວ່າງຮອງກັບຫົວໜ້າ ບໍ່ໄດ້ໃຊ້ຄະແນນສຽງ
ຮອງບໍ່ໄດ້ໂຕ້ຖຽງ ຄັດຄ້ານຫົວໜ້າ
ທັງນັ້ນກໍ່ເນື່ອງຈາກວ່າ ຫົວໜ້າກັບຮອງ
ມັນແມ່ນໜຶ່ງບໍ່ມີສອງ ເປັນຜູ້ກຽວເດັດຂາດ.
ເພາະວ່າເອກະພາບ ມາແຕ່ຂາປະຊາ
ມາຈາກພັກນຳພາ ແຜນການວາງຄັກ
ບໍ່ແມ່ນເຮັດຕາມມັກ ເອກະຊົນໃຜມັນ
ຕົກນ້ຳຫົວພຽງກັນ ພາໃຫ້ຫລຸຍອຳນາດ.

ເສຍພາລະບົດບາດ ແຫ່ງສັດຊູມຄອງ
ກົງກັນຂ້າມກ່ຽວກັບຂາທີສອງ ປະຊາຊົນເປັນເຈົ້າ
ຖ້າຫາກມີແຕ່ເວົ້າ ມີຄະນະ ມີປະທານ
ມີເລຂາ ກຳມະການ ສະມາຊິກຜູ້ລ້ຳຄ່າ.
ແຕ່ວ່າບາດເຣັດວຽກພັດໃຊ້ແບບຫົວໜ້າ ຊີ້ສັ່ງການງານ
ສະມາຊິກກຳມະການ ບໍ່ໄດ້ເວົ້າ ໄດ້ປາກ
ບໍ່ໄດ້ຄິດຫຍັງຍາກ ພາໃຫ້ປູ້ປົນຍາ
ອາດຈະເໝືອນເສນາ ໝາກຂກາຄາວກ່ອນ.
ທັງສອງເບື້ອງແມ່ນໃຊ້ບໍ່ຖືກບ່ອນ ຜິດທຳມະດາ
ຢູ່ເບື້ອງຂາປະຊາ ພັດໃຊ້ສິດອຳນາດ
ຢູ່ເບື້ອງຂາອຳນາດ ພັດໃຊ້ສິດປະຊາ
ເຣັດແນວນັ້ນມັນແມ່ນໄຂ່ວຕີນກາ ສອງຂາໂຄນຂີ
ອັດກັນຢູ່ຈັ້ງຊີ້ ! ຈັ້ງຊີ້ ! ຈັກຊີ້ຢ່າງແນວໃດ
ປາດເດີນໄດ້ເດີນໄວ ມີແຕ່ການແກ້ໄຂ ວິທີການເຣັດວຽກ
ຢ່າໃຫ້ມັນປັ່ນປ່ຽນ ໂຄນຂີ້ຕີນກັນ
ຂາປະຊາ ມີບົດບາດຢືນຢັນ ປະກັນສິດເປັນເຈົ້າ.
ມີສິດສຽງຖຽງເວົ້າ ສຸດອົກສຸດໃຈ
ບໍ່ເອົາຜິດກັບໃຜ ອອກຄວາມເຫັນໃຫ້ຄົບຖ້ວນ
ໃຊ້ຫົວຄິດປະກອບສ່ວນ ໃນມະຕິແຜນການ
ເພື່ອຈະໃຫ້ປະທານ ສະຫລຸບດີຮຽບຮ້ອຍ.
ສຽງສ່ວນໜ້ອຍ ຂຶ້ນກັບສຽງສ່ວນຫລາຍ
ຢູ່ທ່າງເສີມຂະຫຍາຍ ຫົວຄິດປະດິດສ້າງ

ການຈັດຕັ້ງຊັ້ນລ່າງ　　ຂຶ້ນກັບຂັ້ນເທິງ
ແຕ່ຂັ້ນຕ່ຳຈົນເຖິງ　　ຂັ້ນສູງສຸດຂາດ
ປະສານຂາອຳນາດ!　　ເຂົ້າກັບຂາປະຊາ!
ປະຕິບັດບັນດາ　　ຂໍ້ມະຕິຕ່າງໆ.

ການພົວພັນລະຫວ່າງ　　ບົດບາດທັງສອງ
ປະຊາຊົນ ມີບົດບາດເປັນເຈົ້າຂອງ　　ການປົກຄອງມີບົດບາດເປັນ ເຄື່ອງໃຊ້
ໝາຍຄວາມວ່າ ເປັນເຄື່ອງມືເຄື່ອງໄມ້ ຮັບໃຊ້ປະຊາຊົນ
ຢາກຮັບໃຊ້ໄດ້ຜົນ　　ຕາມພາລະບົດບາດ.

ທັງສອງຂາເດັດຂາດ　　ຕ້ອງແມ່ນພັກນຳພາ
ປຽບເໝືອນດັ່ງແສງຕາ　　ເບິ່ງທາງໄປກ່ອນ
ການຈັດຕັ້ງທຸກບ່ອນ ບໍ່ວ່າຝ່າຍປົກຄອງຫລືກອງທັບ ກໍໃຊ້ຂາທັງ ສອງ ເດີນໄປຄຽງຄູ່
ບໍ່ວ່າຢູ່　　ການຈັດຕັ້ງປະຊາ
ລ້ວນແຕ່ເດີນສອງຂາ　　ເອົາຕາໄປກ່ອນ

ຟ້ອນທັງຍໍແຂນຟ້ອນ　　ໃຫ້ມັນຄ່ອງມັນດີ
ຟ້ອນໃຫ້ຖືກກັບທຳນອງດົນຕີ　　ສາມັກຄີຮ່ວມໝູ່
ຟ້ອນເປັນໝູ່ເປັນຄູ່　　ຮຽກວ່າຟ້ອນລຳວົງ
ທັນບາດກ້າວຂຶ້ນສູ່ຈຸດປະສົງ　　ຜ່ານສາມຈັງຫວະຟ້ອນ

ຈັງຫວະໜຶ່ງເດີນກ່ອນ　　ແມ່ນຟ້ອນວາງແຜນການ
ຈັງຫວະສອງວຽກງານ　　ແມ່ນຟ້ອນລົງມືເຮັດ
ຈັງຫວະສາມສຳເລັດ　　ແມ່ນຟ້ອນຖອດບົດຮຽນ

ແລ້ວກໍຟ້ອນໜູນວຽນ ມາວາງແຜນການໃໝ່.

ຟ້ອນຂຶ້ນສູງຊຶກໄຊ້ ທັນປີ້ນປາຍສອນ

ຟ້ອນລຳວົງ ໄປຕາມວົງໂຄຈອນ ດຸ່ງເດີນທາງລ້ຽວ

ເພີ່ນວ່າຫຼວງທາງນັ້ນ ກຽມຕົວໃຫ້ພົ້ນທົ່ວ

ເອົາຫູຕິດໃສ່ຫົວ ເອົາຕາຕິດໃສ່ໜ້າ ດີແລ້ວຈຶ່ງຄ່ອຍໄປ.

ເດີນທາງນັ້ນຕ້ອງໃຊ້ ກຳລັງໃຫຍ່ມະຫາຊົນ

ເຂົ້າສູ່ການຜະລິດຜົນ ເປັນສະໜາມຮົບໃຫຍ່

ປະຊາຊົນລາວໃໝ່ ປະຕິວັດສາມປະການ

ຢ່າງພິລະອາດຫານ ທົນທານໜຽວແໜ້ນ

ຄື: ອັນທີ 1 ນັ້ນແມ່ນ ທັນປ່ຽນແປງປະດິດ

ດ້ານພົວພັນການຜະລິດ ໃຫ້ມີກົນມິໃຊ້

ກ້າວຂຶ້ນສູ່ຍຸກໃໝ່ ອັນອຸດົມຮັ່ງມີ.

ອັນທີ 2 ສີກສີ ສວຍງາມອົງອາດ

ນັ້ນແມ່ນການປະຕິວັດສ້າງຄົນ! ສ້າງຊາດ ໃຫ້ກ້າວໜ້າທັນການ

ປະຊາຊົນຮ່ວມກັນສ້າງຜົນງານ ເປັນຂະບວນຟົດຟື້ນ

ແລະເບີກບານມ່ວນຊື່ນ ຢູ່ໃນທົ່ວວົງຈອນ.

ອັນທີ 3 ແນ່ນອນ ວັດທະນະທຳແນວຄິດ

ຕ້ອງຮັດຢ່າງເບື້ອງນິດ ທຸກລົມທັນໃຈ

ທີ່ນໃຈອອກທັນໃຈເຂົ້າຍາມໃດ ໃຫ້ຖືກຕ້ອງຍາມນັ້ນ

ໂດຍສະເພາະແມ່ນແນວຄິດຫລັກໝັ້ນ ຮັກມິດຊັງສັດຕູ

ຕັ້ງສະຕິເຈີດຊູ ເອົາຕາໄປກ່ອນ.

ລະຫວ່າງເດີນກັບຟ້ອນ ກໍແມ່ນເຫດກັບຜົນ

ຟ້ອນ ໄດ້ດີ ໄດ້ຄືນ ການເດີນກໍກ້າວໜ້າ
ຄັນຟ້ອນບໍ່ຖືກທ່າ ຕາມແບບສາມປະການ
ອາດຈະພາຊ້ານານ ຫລົງທາງຫລົງທິດ.

ຫລົງສັດຕູລືມມິດ ໂລດເປັນອັນຕະລາຍ
ອັນນົມຄວາມໝາຍ ໃຫ່ຍຫລວງເຫລືອລົ້ນ
ດັ່ງນັ້ນໝົດທຸກຄົນຈິ່ງຕ້ອງເດີນໄປໜ້າ ເອົາຕາໄປກ່ອນ
ສອງມືກຳກ່ຽວຄ້ອນ ຄືງຟ້ອນອ່ອນແຂງ.

ສ້າງສັງຄົມນິຍົມໃຫ້ສຳເລັດດັ່ງແມ້ງ ໄວ່ອງທັນການ
ປາກຮອດໄວເພີ່ນໃຫ້ຄານ ປາກຍາວນານເພີ່ນໃຫ້ແລ່ນ
ຄຳເວົ້ານັ້ນແມ່ນ ສອງໜ້າໜຶ່ງບັນຫາ
ໜ້າທີໜຶ່ງ, ໝາຍເຖິງການໄປມາຫລືເຮັດວຽກສ້າງສາໃຫ້ ຮອບ
ຄອບ ຖີ່ຖ້ວນ.

ບໍ່ຮ້ອນຮົນຮີບດ່ວນ ແບບມະລຶງຕຶງຕັງ
ບໍ່ເບິ່ງໜ້າເບິ່ງຫລັງ ນິວເນົາປະໝາດ
ເຮັດແບບນັ້ນອາດຈະຖືກຜິດພາດ ກົ້ນທົ່ງຫວາຍຫລັງ
ບໍ່ເປັນຕາມຄວາມຫວັງ ປາກຮອດໄວພັດໄດ້ຊ້າ.

ດັ່ງນັ້ນກ່ອນຈະລົງມືເຮັດຕ້ອງມີການ ຄົ້ນຄວ້າຍຸດທະສາດ ຍຸດ
ໂທບາຍ

ໝົດທຸກເລື່ອງທຸກລາຍ ວຽກໃຫ່ຍການນ້ອຍ
ຕ້ອງຮ່ຳຮຽນໃຫ້ມັນດີຮຽບຮ້ອຍ ແຈ້ງຕາແຈ້ງຫູ
ຄຳບູຮານເພີ່ນວ່າ: ໝົກປາແດກກໍມີຄູ ຈີປູກໍມີວາດ."
ເລີ່ມເວົ້າເດັດຂາດ "ບໍ່ມີທິດສະດີ

ມັນກໍບໍ່ອາດມີ ການເຄື່ອນໄຫວປະຕິວັດ"
ເປັນຄວາມຈິງແຈ້ງຊັດ ຄັກແນ່ອີຫລີ
ບໍ່ມີທິດສະດີ ບໍ່ມີການຕໍ່ສູ້.

ດ້ານທີສອງເວົ້າເຖິງການເປັນຢູ່ ເມື່ອຢາກຢູ່ຍາວນານ
ຄົນເຮົາຕ້ອງມີການ ເໜັງຕີງເຕັ້ນແລ່ນ
ມັນໂລດກາຍວ່າແມ່ນ ໃຜໆກໍ່ຄືກັນ
ຕີງໝົດມື້ໝົດວັນ ຫົວໃຈກໍ່ຕອດເຕັ້ນ.
ເລືອດກໍ່ແລ່ນຕາມເສັ້ນ ສິນສວ່ານໄປມາ
ແລ່ນຢູ່ທຸກເວລາ ເໜັງຕີງເຕັມທີ
ຄົນບໍ່ຕີງ ຫລືບໍ່ແລ່ນຈັກດີ້ ຈັກວ່າຊີວ່າແນວໃດ
ຄົນເກີດມາ ໂລດບໍ່ວ່າແຕ່ໃຜ ແມ່ນບໍ່ໄດ້ຫລີກເວັ້ນ.

ມັນຕ້ອງແລ່ນຕ້ອງເຕັ້ນ ທຳມາຫາກິນ
ຈຶ່ງຈະມີຊີວິດຢູ່ເປັນຄົນເຕີມຄົນ ຍາວນານໄປໄດ້
ນີ້ແລະເປັນຂໍ້ໃຫຍ່ ກົກຮາກບັນຫາ
ຈຶ່ງວ່າຕື່ນເຊົ້າມາ ຫາກິນເຕັ້ນແລ່ນ.

ລາງເທື່ອນັ້ນກໍ່ແມ່ນ ເຕັ້ນແລ່ນທົດກາຍ
ໃຫ້ຮ່າງກາຍແຂງແຮງ ມີຄວາມສຸກສະບາຍ ເພື່ອທຳການຕໍ່ສູ້
ໝາຍຄວາມວ່າຕໍ່ສູ້ ທຳມະຊາດແລະສັງຄົມ
ສ້າງບ້ານເມືອງໃຫ້ຮັ່ງມີອຸດົມ ໝົດທຸກຄົນກໍ້ກ້າວໜ້າ

ດັ່ງນັ້ນ ເພີ່ນຈຶ່ງວ່າ: "ຄົນຢາກໄວໃຫ້ຄານ, ຢາກຊານານ ໃຫ້
ແລ່ນ"

ມັນໂລດແມ່ນແຕ່ຟ້າ ບໍ່ຄາຂ້ອງຊ່ອງໃດ

ທິວໃນຄືນເຮົານີ້ ແມ່ນເຫັນດີທັງສອງຢ່າງ
ໄວກໍ່ແຮ່ງຕ້ອງການ ນານກໍ່ແຮ່ງຢາກໄດ້ ຈືຄານລ້ຽວແລ່ນໄປ.

ຈຶ່ງວ່າ ໄວຮີບໄວ! ຕັດສິນໃຈເດີນກ້າວ ຟ້າວຍ່າງສອງຂາ
ຕາກໍມຶ້ນມອງໃສ ເບິງ ໄກເຫັນກ້ວາງ
ແມ່ນທັງ ເດີນທັງຟ້ອນ ລຳລົງທັນປ່ຽນ
ໃຫ້ມັນວຽນວີງກ້າວ ກາຍຂຶ້ນຍືນສູງ

ຈຶ່ງວ່າປ້າເຮີຍລູງ! ກັບຫລານທີ່ວ ໄປໝົດທຸກເພດທຸກ ໄວມາລຳ
ວົງສາມັກຄີ......
ລຳລົງນີ້ມີທັງແຂງທັງອ່ອນ ທັງພ່ອງຂັບພ່ອງຟ້ອນ ເດີນກ້າວຢ່າງ
ລາວ
ສາມຈັງຫວະບາດກ້າວ ແມ່ນເລີ່ມຈາກປະຊາຊົນ
ແລ້ວຈຶງວຽນໄປຫາພັກນຳພາວາງແຜນ ສັດຄຸ້ມຄອງຈັດຕັ້ງ.

ປະຕິບັດດີແລ້ວ ວຽນຄືນຫາປະຊາອີກ
ກົງຈັກລັດກຳນະຊີບ ທັນເປັນວົງສົ່ງຂຶ້ນ ຄຸງປ້ອມບ່ອນຈອມ
ທັນເປັນວົງປີ່ນອ້ອມ ປະຕິວັດສາມປະການ
ທັງແບ່ງງານທັງປະສານ ບໍ່ແຍກໄກກັນໄດ້.

ເຮັດສາມການປະຕິວັດສຳເລັດດີເທົ່າໃດ ກົງຈັກລັດສາມໜ້າ
ຜະເດັດການກຳນະຊີບ
ກໍຍິ່ງແຂງແກ່ນໜັ້ນ ທັນກ້າວວ່ອງໄວ
ສັດຕູໃດອອດກ້າ ມາລ້ຳລ່ວງຂວາງຂັດ
ບອກວ່າໝັດແລກໝັດ ດຳເນີນສາມປະຕິວັດ ຢ່າງບໍ່ ຖອຍຫາງ
ກ້າວ.

ພັກປະຊາຊົນປະຕິວັດລາວ ຖືທວນໄຟນຳໜ້າ ບໍ່ມີຍາມຫຍໍ້ທໍ້
ກຳໄດ້ສັດຈະທຳ ເປັນອາວຸດເລີດລ້ຳ ຈິຢຳຢ້ານຍ່ອນຫຍັງ ?.

# ແຄນລາວ
# ບໍ່ລືມເຄົ້າ

ຟັງກ່ອນ! ຟັງກ່ອນ!　　ເຊີນພີ່ນ້ອງຟັງກ່ອນ!
ບໍ່ແມ່ນຟັງລຳໜູ່　　ລຳຄູ່ລຳກອນ!
ແມ່ນຟັງຕ່ອນປິດສະໜາ　　ແລະຟັງຕອບບັນຫາ
ມື້ວານນີ້ອາຈານໜຶ່ງ　　ເພິ່ນຍ່າງມາຕາມທາງ
ພໍດີມີຄົນຖາມ　　ຄົນສຸພາບດີງາມ
ຖາມວ່າມາແຕ່ໃສ?　　ເພິ່ນກໍ່ຕອບໂດຍໄວວ່າມາແຕ່ທາງຫລັງ
ຜູ້ຖາມຫລັບຕາຊົງ　　ແລ້ວກໍ່ຖາມຕໍ່ໄປ
ຖາມດ້ວຍຄວາມຈິງໃຈ　　ວ່າຈະໄປທາງໃດ?
ເພິ່ນກໍ່ຕອບຈິງໃຈ　　ວ່າຈະໄປທາງໜ້າ
ທາງຜູ້ຖາມທຳທ່າ　　ໜ້າໃຄ່ຊູກໃຈ
ແລ້ວກໍ່ຖາມຕໍ່ໄປ　　ດ້ວຍສຽງອັນດັງ
ວ່າຈະໄປສັງ?　　ແມ່ນຈະໄປສັງ?
ເພິ່ນກໍ່ຕອບຢ່າງມີພະລັງ　　ດ້ວຍສຽງອັນດັງວ່າ: ເຈົ້າ! ເຈົ້າ! ເຈົ້າ! ເຈົ້າ!
ແມ່ນແທ້! ແມ່ນແທ້ແມ່ນວ່າ　　ໄປສັງແທ້ໄປສັງວ່າ!
ໄປສັງທຳມະດາ　　ໄປສັງຢ່າງສອງຂາເອົາຕາໄປກ່ອນ
ໄປສັງບ່ອນເໝາະສົມຄືສັງຄົມນິຍົມ　ປະຕິວັດ 3 ປະການ

ສົງ ໄລຍະຂ້າມຜ່ານ　　ທະຍານກ້າວ! ທະຍານກ້າວ!

ໂອຍ! ພໍແຕ່ເປີດຜ້າມ່ານກັ້ງ　　ແຈ້ງສະວ່າງໃນຕາ!
ຍ້ອນມີພັກນຳພາ, ຍ້ອນມີການສຶກສາ　　ຮ່ຳຮຽນດີແລ້ວ
ຈຶ່ງມີແສງຕາແກ້ວ　　ແວວໄວໃສສ່ອງ
ມອງເຫັນທົ່ວທຸກດ້ານ　　ເມືອງບ້ານຕ່າງຫລັງ.

ຈຶ່ງວ່າເປີດຜ້າມ່ານກັ້ງ　　ແຈ້ງສະຫວ່າງໂລກາ
ວັນທີ 2 ທັນວາ　　ໄດ້ຕ່າວມາເຖິງແລ້ວ
ຈຶ່ງເຫັນສີແສງແກ້ວ　　ພະຈັນເພັງຂາວພ່ອງ
ເມກບໍ່ມາບັງຕາ ຟ້າກໍໃສສ່ອງແຈ້ງ　　ດາວລ້ອມກ່ອມພະຈັນ.

ພໍແຕ່ເປີດຜ້າມ່ານກັ້ງ　　ແຈ້ງສະຫວ່າງເດືອນຕຸລາ
ຫລຽວເຫັນແສງສຸລິຍາ　　ຍຸກສະໄໝໃສແຈ້ງ
ຂອບສີແດງແຝງສີຟ້າ　　ຂຽວຄາມງາມສະງ່າ
ພະຈັນຂາວຢູ່ເຄີງຟ້າ　　ໃສເຫລື້ອມນັ້ນແມ່ນລາວ-　　ແທ້
ແຫລ້ວ!

ຈຶ່ງວ່າເປີດຜ້າມ່ານກ້າວ　　ເດີນຜ່ານຊົມແດນ
ຫູໄດ້ຍິນສຽງແຄນ　　ແກ່ນລາວເປັນເຈົ້າ
ຊື່ວ່າແຄນມີເຕົ້າ　　ມີເລົາມີຄູ່
ລັກສະນະດີສູ　　ໂຮມເຕົ້າເຜົ່າພັນ.

ຈຶ່ງວ່າເປີດຜ້າມ່ານກັ້ງ　　ແຈ້ງສະຫວ່າງແນວຄິດ
ເຫັນບັນຫາຊີວິດ　　ໂຊກຊະຕາເມືອງບ້ານ
ມີສິນຍານໝາຍໄວ້　　ໃນແຄນລາວເຕົ້າໃຫຍ່
ລາວເຮົາເຕົ້າໝູ່ໄດ້　　ຄືນຈຶ່ງເອີ້ນຊື່ລາວ.

ຄຳວ່າລາວ, ໝາຍເຖິງຜູ້ເປັນເຈົ້າ ເປັນໃຫຍ່ເປັນກົກ
ເຊັ່ນ: ລາວຈົກລາວເຈືອງ ເລື່ອງບູຮານປະຖົມເຄົ້າ
ຄຳວ່າລາວຫລືເຈົ້າຊ້ຳມັກຕິດກັບເຕົ້າ ເປັນອັນດຽວໜຽວແກ່ນ
ຄືລູກແຄນຮ່ວມເຕົ້າ ເຂົາຈິ່ງເອີ້ນຊື່ແຄນ.
ຈັ່ງວ່າເຕົ້າໃຫ້ແໜ້ນ ແຄນໃໝ່ສີວິໄລ-ລາວເອີຍ!
ເຕົ້າທັງກາຍທັງໃຈ ຮ່ວມກັນເປັນເຈົ້າ
ສາມັກຄີໂຮມເຕົ້າ ແນວລາວສ້າງຊາດ
ຊະນາຍາດໃຫຍ່ນ້ອຍ ຍາວສັ້ນຮີບຮ່ວມກັນ.
ແນວໂຮມລາວ, ມີໃຈກາງແກ່ນໝັ້ນ ພັນທະພາບພະລາ ດອນ
ກຳມະກອນຊາວນາປັນຍາຊົນສຶກສາ ພັກນຳພາຊີ້
ສາມັກຄີປົກປ້ອງ ພະຈັນເພັງປະເທດຊາດ
ພັດທະນາກໍ້ສ້າງ ເມືອງບ້ານໃຫ້ຮຸ່ງເຮືອງ
ໃຫ້ລາວທັນປີ້ນເບື້ອງ ຟ້ອນແອ່ນໃສ່ສຽງແຄນ
ຟ້ອນແບບລາວລຳແພນ ຜ່ານສາມຈັງຫວະຟ້ອນ
ຈັ່ງຫວະໜຶ່ງອອກກ່ອນ ແມ່ນຟ້ອນວາງແຜນການ
ຈັ່ງຫວະສອງວຽກງານ ແມ່ນຟ້ອນລົງມືເຮັດ
ຈັ່ງຫວະສາມສຳເລັດ ແມ່ນຟ້ອນຖອດບົດຮຽນ
ແລ້ວກໍ້ຟ້ອນໝູນວຽນ ມາວາງແຜນການໃໝ່
ຟ້ອນຂຶ້ນສູງຈັກໃຊ້ ບໍ່ມີເມື່ອຖອຍຫລັງ
ປຸກລະດົມກຳລັງ ເພື່ອລາວໂຮມເຕົ້າ
ຈັ່ງວ່າຈິດງເຂົ້າ ແຄນລາວຮີບເປົ່າ
ປາກເປົ່າເຕົ້າ ມືເຈົ້າເຄື່ອນໄຫວ

ສະແດງອອກໃຫ້ໄດ້ "ປາກວ່າມືເຮັດ"
ໃຫ້ເຖິງພົນສຳເລັດ ບໍ່ປ່ອຍວາງມືລ້າ.
ບໍ່ຍອມປະນີໄວ້ ແບຫງາຍດາຍເປົ່າ
ປາກເປົ່າເຕົ້າ ມືເຈົ້າກໍບໍ່ເຊົາ
ແດນໃຫ່ຍເຕົ້າ ປາກເປົ່າມືນັບ
ເອົາສອງມືໂຈມຈັບ ນັບແດນຫລາຍດີ້ວ.
ສອງມືສິບນີ້ວ ປະສານແຮງໂຮມໝູ່
ຮູບແດນລາວລັກສະນະຕໍ່ສູ້ ຍາວສັ້ນດັ່ງປືນ
ສຽງແດນລາວດັ່ງສະເທືອນພິດຟື້ນ ສັດຕູຕື່ນຕົກໃຈ
ສຽງແດນຍຸກສະໄໝ ໃຫ່ມລາວດັ່ງກ້ອງ.
ມີທຳນອງແລະເນື້ອໃນຍຸກໜ້າ ສານຶກຄິດແຂງຂື່ນ
ປະຕິການສາກົນ, ຈັກກະພັດຕື່ນຢ້ານ ໂຕນຮ້ານແລ່ນໜີ
ເພາະວ່າແດນດວງນີ້ ປາກວ່າມືເຮັດ
ແມ່ນແດນເຂັດແດນຢຳ ປ່ຽນທັບສາມດ້ານ.
ການສຶກສາວັດທະນະທຳ ແນວຄິດເດີນນຳໜ້າ ອວນພາ ໄປ
ກ່ອນ
ວຽກງານອື່ນກໍ່ຮີບຮ້ອນ ເດີນກ້າວຍ່າວຕາມ
ຈຶ່ງວ່າ: "ງາມແສນງາມ ດວງພະຈັນວັນເພັງ
ແດນລາວບັນເລງ ສົ່ງເພງຊົມເຊີຍ
ປະເທດຊາດລາວເອີຍ! ຮົ່ງມີສວຍງາມ".
ງາມໆແທ້ ພະຈັນເພັງພົງເພົ່າ
ພະຈັນເພັງເບັງເຕົ້າ ແສງເຫລື້ອມທົ່ວແດນ

"ແຜນເອີຍແຜນ!
ທີ່ຈະມາຮຸກຮານ
    ຈົ່ງວ່າເຄືອງກ້ອງ
ທັງສີຊໍ້ລ້ານຊ້າງ
ມີທັງດີດຮອບດ້ານ
ວົງດົນຕີສາກົນ
    ສຽງດົນຕີທັນກ້າວ
ພາກັນເກັ່ງຮອບດ້ານ
"ລາວເອີຍລາວ!
ຢ່າສູລືມສຽງຊໍ
ສາມັກຄີແໜ້ນແຟ້ນ
    ຈົ່ງວ່າທັນໆກ້າວ
ປາກເປົ່າເຕົ້າ
ປ້ອງກັນຊາດແລະກໍສ້າງ
ປະຕິຍານຕົນຂານ
    ກົກຍໍ່ໄລລືມເຫວົ້າ
ສາມັກຄີຕໍ້ສູ
ບອກວ່າທຸກສ່ຳສຽງ
ຍັງຍິນສຽງໃດ
    ສຽງແຄນໃສກົນກ້ຽງ
ປຽບໃສ່ສຽງເສບຊັ້ນ
ມີຄວາມໝາຍຮອບດ້ານ

ຄຽດແຄ້ນຝູງມານ
ມ້າງເພພະຈັນເພັງ".
ກອງໄຊປະສານເສບ
ພົ້ນກ້າວເຄືອງຍານ
ຕີເປົ່າທັງສີ
ເສບປະສານຫລາຍຊັ້ນ.
ຄືນລາວກໍທັນເສັ້ງ
ເດີນກ້າວຍ່ານຍາວ
ເວລາໂອລະນໍ !
ສຽງພິນສຽງແຄນ !
ປົກປ້ອງດວງພະຈັນ".
ແຄນລາວຮີບເປົ່າ
ມີເຈົ້າຢ່າວາງ
ເປັນໜ້າທີ່ຍາວນານ
ລູກແຄນບໍ່ລືມເຕົ້າ.
ກໍຄືລາວບໍ່ລືມໝູ່
ຮັກສາເຊື້ອຊື່ສຽງ
ສຽງແຫ່ງດົນຕີ
ຊີ່ມ່ວນປຸ້ນປານໄດ້.
ເໝືອນສຽງກໍລະວີກ
ສະຫວັນຟ້າບໍ່ມ່ວນປານ
ລັດທີຊາດແລະສາກົນ

ປູກລະຄົນປວງຈົນ ໃຫ້ຕື່ນຕົວເຕັມເຕົ້າ.
ໂຮມຮ່ວມກັນເປັນເຈົ້າ ແດນລາວເຕົ້າໃໝ່
ໃຊຢູ່ໃສກໍຮົບເຕົ້າ ກັນເຂົ້າໝູ່ເຮົາ
ສົມວ່າແມ່ນລູກເຕົ້າ! ລູກເຕົ້າ! ເວົ້າອອກເປັນສຽງ
ເປັນສຳນຽງພາສາ ສືບມາແຕ່ນານຊ້າ.
ນັບປະມານເຖິງຫ້າ ພັນປີບໍ່ແມ່ນງ່າຍ
ຈີນມີຊື່ວ່າອ້າຍ ລາວເຕົ້າຕໍ່ມາ
ມາບັດນີ້, ພັດແມ່ນເຕົ້າກ້າວໜ້າ ກາຍວ່າເໝາະສົມ
ເຕົ້າສັງຄົມນິຍົມ ແມ່ນປະຊາເປັນເຈົ້າ
ຄືເດືອນເພັງເຕັມເຕົ້າ ລາວເຮົາງາມສະຫງ່າ
ຢືນເປັນປ້ອມດ່ານໜ້າ ໃສແຈ້ງສ່ອງແສງ
ສີເຮີຍ! ສີບານອນ! ຊື່ວ່າລາວທັງມວນ
ພ້ອມກັນມ່ວນສຽງແຄນ ຢ່າລືມເຕົ້າ! ຢ່າລືມເຕົ້າ!

# ກົ້ຣົ່ມ

## ພະຈຶ່ນເຫົງ

ເລື່ອງເອີຍ! ເລື່ອງເກົ່າໃໝ່! ຍ້ອນຍາກທັນສະໄໝ
ບາງຄົນເວົ້າແຕ່ເລື່ອງໃໝ່ ແຕ່ມັກໃຊ້ຄວາມເກົ່າ
ພວກເຮົາເວົ້າເລື່ອງເກົ່າ ແຕ່ຫາກເອົາຄວາມໃໝ່
ເລື່ອງລີສີຕາໄຟ ກັບຈິດໃຈລາຊະວົງ
ເລື່ອງຊາດລາວວິລະຊົນ ກັບລັດທິສາກົນ
ເມື່ອມີເຫດຈິງມີຜົນ ມີຕົ້ນຈິງມີປາຍ
ບໍ່ມີຕາຍກ່ອນເກີດ, ແຕ່ເດັດຂາດບໍ່ໜີກາຍ, ມີເກີດຕ້ອງມີຕາຍ
ມີຂວ້າຕ້ອງມີຫວາຍ ມີຕົມຕ້ອງມີຊາຍ
ຢາກສືບເຊື້ອເຄືອສາຍ ຄົນມັກວ່າຍມັນໄດ້ຍາກ
ຕ້ອງຜ່ານຄວາມລຳບາກ ຄົນເຮົາຈິ່ງໄດ້ດີ
ນີ້ແມ່ນສະຕິເຕືອນໃຈແຕ່ສະໄໝບູຮານປະຫວັດສາດກ້າວຜ່ານມາ
ນານແລ້ວ!!!!

× ×

×

ໂລກແຫ່ງທຳມະຊາດ ກໍຄືທຳມະດາ
ຄົນເຮົາຍ່າງສອງຂາ ເອົາຕາໄປກ່ອນ
ໃຜຜູ້ແສງຕາອ່ອນ ບໍ່ຫ່ອນສ່ອງເຫັນໄກ
ໃຜຜູ້ແສງຕາໃສ ຕາໄຟແດງກ້າ.
ສ່ອງລົງດິນເຫັນຟ້າ ບໍ່ມີວ່າຫຍັງບັງ

ຫລຽວຄືນຫລັງ          ກໍ່ເຫັນປາງປະຫວັດສາດ
ຫລຽວໄປໜ້າກໍ່ເຫັນຊາດ          ລາວໃຫມ່ສົດໃສ
ຍ້ອນວ່າຍຸກສະໄໝ          ມັນໄຂທາງຈ່າງປ່າງ.

ເພີ່ນເວົ້າວ່າ: "ບ້າງເຈົ້າຍ່າງ          ບ້າງລາຊະວົງ
ຂົງວຽງຈັນ          ລາຊະວົງຊິເປັນເຈົ້າ
ເຫັນວ່າວຽງຈັນເສົ້າ          ສາວເຮີຍຢ່າຟ້າວວ່າ...
ໝາຍວ່າ–ເມືອງລາວເຮົາຊິໂປ້ບາດຫລ້າ ໝາກແຕງຊ້າງໜ່ວຍ
ປາຍ.

ຄວາມຕອນນີ້          ມັນຊິບອກໃຫ້ເຫັນຫຍັງ?
ຊິໃຫ້ເຫັນຄວາມຫວັງ          ແລະຈິດໃຈອັນຫ່ວງຮ້ອນ
ຂອງຄົນລາວຄາວກ່ອນ          ຢາກເຫັນຊາດຈະເລີນ
ເພີ່ນຍ້ອງຍໍສັນລະເສີນ          ລາຊະວົງເປັນເຈົ້າ.

ຜູ້ເຖົ້າລາວເຄີຍເລົ່າ          ເລື່ອງພື້ນນິຍາຍ
ເວົ້າກັນວ່າ ລາຊະວົງຍັງບໍ່ຕາຍ          ບໍ່ສູນຫາຍຈັກເທື່ອ
ຍິ່ງກວ່ານັ້ນກໍ່ຍັງເຊື່ອ          ວ່າເພີ່ນຊິຄືນມາ
ເພາະເພີ່ນເຄີຍພັນຊາ          ກອງທະຫານກູ້ຊາດ

ໃນສະໄໝປະຫວັດສາດ          ເຈົ້າອະນຸນຳພາ
ເຊື່ອວ່າລາຊະວົງຊິຄືນມາ          ເປັນທະຫານຜູ້ໜຸ່ມນ້ອຍ
ຮອດນີ້ ອາຍຸເພີ່ນເປັນສອງຮ້ອຍ          ມີຊື່ບໍ່ສູນຫາຍ
ລາຊະວົງເປັນຄົນຊາຍ          ລູກລາວຜູ້ອົງອາດ.

ໃນສະໄໝປະຫວັດສາດ          ກໍ່ຕ້ານສົງຄາມ
ຕ້ານອາດຍາສິດສະຫຍາມ          ແລະນາຍທຶນຕ່າງຊາດ

| | |
|---|---|
| ເວລານັ້ນອັງກິດຄອງບົດບາດ | ຖານະເປັນນາຍ |
| ເປັນຜູ້ອອກອຸບາຍ | ວາງແຜນທຸກຢ່າງ |
| ໃຊ້ທະຫານກວາດລ້າງ | ບຸກລຸກໂຈມຕີ |
| ເປັນເວລາສາມປີ | ປາບຂະບວນຕໍ່ສູ້ |
| ຕາມຜູ້ເຖົ້າເວົ້າສູ່ | ອັງກິດບໍ່ພໍໃຈ |
| ຖ້າວ່າສັກດີນາໄທ | ບໍ່ກວາດກ້ຽງທຳລາຍກ້ຽງ. |
| ຕາມຜູ້ເຖົ້າເລົ່າເລື່ອງ | ອັງກິດໄທສັກດີນາ |
| ໃນເວລາ | ຢຶດວຽງຈັນໄດ້ |
| ສັ່ງໃຫ້ກອງກຳລັງໃຫຍ່ | ຈູດວັດເຜົາວາ |
| ເກັບກວາດເອົາໝູໝາ | ງົວຄວາຍເປັດໄກ່. |
| ຢ່າງໂຫດຮ້າຍຄັ້ງໃຫຍ່ | ຂ້າເຈົ້າເອົາຂອງ |
| ຂ້າເດັກນ້ອຍ, ທີ່ພວມອຸ້ມພວມອອງ | ຢູ່ໃນອ້ອມອົກແມ່ |
| ຂ້າຜູ້ເຖົ້າຜູ້ແກ່ | ກວາດຕ້ອນປະຊາຊົນ |
| ເອົາທັງສັດທັງຄົນ | ເຄື່ອງຂອງບໍ່ເຫລືອຄີກ. |
| ຍັງບໍ່ໜຳຊ້ຳອີກ | ສັ່ງໃຫ້ກອງກຳລັງ |
| ເຜົາທະລາຍເພພັງ | ເຮືອນຊານອັນແປນເປົ່າ |
| ຈູດສາງເກືອເລົ້າເຂົ້າ | ໃຫ້ເປັນຝຸ່ນອັກຄີ |
| ເວລານັ້ນພິດ | ລາຊະວົງນາພໍ້. |
| ເຫັນສັດຕູຍັງສືບຕໍ່ | ຈູດວັດເຜົາວາ |
| ອັນເປັນສິ່ງສັກກາລະບູຊາ | ທີ່ຄ້ຳທີ່ແກ້ວ |
| ຈູດແລ້ວຍັງບໍ່ແລ້ວ | ມ້າງຄ້າຍທຳລາຍຄູ |
| ມ້າງກຳແພງປະຕູ | ວຽງຈັນທຸກຊັ້ນ. |

ລາຊະວົງບໍ່ອາດຈະອົດກັ້ນ ປົກທີ່ກອງໄຟ
ທີໄໝ້ຂື້ນໃນໃຈ ລຸກຮືອື້ແດັນ
ພາໃຫ້ມີກຳແຮ່ງ ດ້ານຄາບດວງຄືນ
ຄັ້ງສຸດທ້າຍໄດ້ຈັດຕັ້ງລະດົມ ທະຫານລາວທີ່ເຫລືອຄ້າງ
ປະຊາຊົນຢູ່ຕາມແຫ່ງຕ່າງໆ ອ້ອມແອ້ມວຽງຈັນ
ໄດ້ປະມານປາຍພັນ ກາງຄືນພະຈັນແຈ້ງ
ຈັດຂະຫຍາຍກຳລັງ, ເຂົ້າປິດລ້ອມທຸກແຫ່ງ ຫອກງ້າວເຕະລຸມບອນ
ສັດຕູພວມຫລັບນອນ ຝັນດື້ອນແຈ້ງ.
ຄິດວ່າຟ້າຜ່າແລ້ວ ປືນແລ່ນຕຳກັນ
ນັບເປັນຮ້ອຍເປັນພັນ ຫົວກຸດມຸດມອດ
ຕາຍເກືອບໝົດເຕະຫລອດ ໜີໄດ້ແຕ່ຊາວໂຕ
ຊຸມອາວຸດຍຸດໂທ ທັນສະໄໝນິຍົມໃຊ້
ທັງປືນນ້ອຍປືນໃຫຍ່ ປືນສັ້ນປືນຍາວ
ຖືກທະຫານອ້າຍລາວ ລາຊະວົງລົງໂທດ
ບໍ່ແມ່ນເພີ່ນເຮັດໂພດ ໃຜກໍ່ວ່າເໝາະສົມ
ປະຊາຊົນນິຍົມ ຍ້ອງຍໍຍົກອ້າງ.
ຖືເອົາເປັນແບບຢ່າງ ອັນສະຫງ່າລາສີ
ດັ່ງນັ້ນ ນັບແຕ່ປີ ພັດແປດຮ້ອຍຊາວເກົ້າ (1829)
ຕົ້ນມາຈົນເຖິງເທົ້າ ພັນເກົ້າຮ້ອຍປາຍ
ລາຊະວົງຍັງບໍ່ຕາຍ ແລະຍັງຄົງອົງອາດ.
ເຖິງວ່າການກູ້ຊາດ ສະໄໝນັ້ນປະລາໄຊ
ແຕ່ທາງດ້ານຈິດໃຈ ພັດຍິ່ງໃສຍິ່ງເຫລື້ອມ

ພົ້ນຍາມສຸມເສື່ອມ    ເທົ່າຊົ່ວໃດໆ
ລາຊະວົງແມ່ນຈົກໃຈ    ຮັກເຊື້ອແນວຊາດ
    ແລະກໍ່ສູ້ເດັດຂາດ    ບໍ່ຍອມຈຳນົນ
ເມື່ອໃດຍັງມີຄົນ    ແມ່ນອ້າຍລາວມີຊາດ
ບໍ່ຍອມຢ່າງເດັດຂາດ    ໃຫ້ຜູ້ອື່ນກືນກິນ
ເຖິງຈະຕາຍຈົນຄົນ    ດິນປົກເທົ່າໃດຊັ້ນ
    ຊື່ສຽງຄົນຜູ້ນັ້ນ    ບໍ່ມີເມື່ອສູນຫາຍ
ຍົກຖືຢ່າງນິຍາຍ    ລາຊະວົງເປັນເຈົ້າ
ພວກເຮົາຂໍລົ້ມເລົ່າ    ເວົ້າສູ່ກັນຟັງ
ເລື່ອງນີ້ເດີມນັ້ນ    ມາຈາກປະຫວັດສາດ
    ເລື່ອງມີຢູ່ວ່າ ຫລັງຈາກການກູ້ຊາດ ເຈົ້າອະນຸເສຍໄຊ
ເຈົ້າອະນຸຖືກສັດຕູຈັບໄປ    ທາລຸນປາບຂ້າ
ລາຊະວົງໄດ້ເອົາຕົນເຂົ້າປ່າ    ດັ້ນດຸ່ງເດີນໄພ
ໄປກັບເພື່ອນຮ່ວມໃຈ    ສາມຄົນອ້າຍນ້ອງ
    ພາກັນເດີນເລາະລ່ອງ    ຊອກຮຽນວິຊາ
ເພື່ອຈະກັບຄືນມາ    ຟື້ນຟູກູ້ຊາດ
ຕັດສິນໃຈເດັດຂາດ    ເດີນໄປ...ເດີນໄປ....
ຈົນໄປຮອດພະລືສີຕາໄຟ    ຢູ່ເມືອງຫລ້ານກ້ຳ
    ຈຶ່ງໄດ້ຮຽນໄດ້ຮ່ຳ    ຄວາມຮູ້ວິຊາ
ຢູ່ທີ່ນັ້ນ, ມີນາງເທພະທິດາ    ລົງມາຮັບໃຊ້
ລົງມາເອົາໃຈໃສ່    ຕ່ຳຫູກຊາວວາ
ແຕ່ລະສີບປະດາ    ສອດການສວຍຫນື່ງບາດ.

ໂອ່! ອັນນີ້ຈຶ່ງແມ່ນຊາດ!　ເພິ່ນດູໝິ່ນຂະຫຍັນ
ຄົນບໍ່ຮອດເຈັດວັນ　ຟື້ນນາງບໍ່ພົ້ນ
ກ້ານສວຍນາງກໍ່ບໍ່ຈືດ　ສອດເສັ້ນໄໝຄຳ
ມິແຕ່ຄ້ຳປະຈຳ　ວັນທີເຈັດໜຶ່ງບາດ
　ຈົນເມື່ອໃດສາມາດ　ຖ້ຳໄດ້ຊາວວາ
ລາຊະວົງ, ເພິ່ນຈະກັບຄືນມາ　ກູ້ຊາດວ່າຊັ້ນ....
ເວລາຄືນມານັ້ນ　ອ້າຍນ້ອງທັງສາມ
ໄດ້ຕັ້ງຊື່ຖືນາມ　ຢ່າງເປັນຕານ່າຢ້ານ.
　ຜູ້ທີໜຶ່ງ, ຊື່ວ່າທ້າວລົ້ນກ່ານ　ປາກເພັດເດັດແຂງ
ຜູ້ທີສອງ ຊື່ວ່າຜາຕີນແດງ　ແຂງແຮງຮອບດ້ານ
ຜູ້ທີສາມ ພັດແຮງເປັນຕາຢ້ານ　ຊື່ວ່າ "ແຂນສັ້ນຍາວ"
ແມ່ນລູກລາວຫລານລາວ　ຫາກແຂນຍາວແຂນສັ້ນ.
　ເພິ່ນໃສ່ຊື່ແນວນັ້ນ　ເພື່ອຢາກໃຫ້ຄົນເຫັນ
ວ່າເລື່ອງນີ້ມັນເປັນ　ບັນຫາບັກໃຫຍ່
ໃຫ້ຄົນເອົາໃຈໃສ່　ຄົ້ນຄ້ວາພາຍຫລັງ
ຄົນເຮົາຟາກຄວາມຫວັງ　ຢາກເຫັນແຂນເພິ່ນນັ້ນ.!
　ຈັກແມ່ນແຂນໃດສັ້ນ　ແຂນໃດຍາວລື່ນ ?
ເວລາໃດຈຶ່ງກັບຄືນ, ຊຸມາກວມກອດກຸ້ມ　ເອົາຊຸມເຊື້ອເຜົ່າລາວ?
ຄັ້ງນັ້ນ ບໍ່ວ່າລຸ່ງວ່າອາວ, ບໍ່ວ່າບ່າວວ່າສາວ ຟັງນິຍາຍປະຫວັດ
ສາດ
ແມ່ນຕ້ອງເຫັນພ້ອມບາດ　ມູນເຊື້ອຊາດລາວ.
　ເພິ່ນຄິດໃຫ່ຍໃຈຍາວ　ທັງສະຫລຽວສະຫລາດ

ບໍ່ຍອມສູນເສຍຊາດ    ໂຕຕາຍໃຫ້ຊາດຍັງ
ເພິນຄິດໃຫ່ຍໃຈຫວັງ    ກວມດິນກວມຟ້າ.
ສິນພໍວ່າ    ຈິດໃຈລາຊະວົງ
ບໍ່ພຽງແຕ່ຍືນຍົງ    ຄົງຕົວຢູ່ໄດ້
ຍັງຂະຫຍາຍກ້ວາງໃຫ່ຍ    ສືບທອດກັນມາ
ບໍ່ອາດພັນລະນາ    ຂະບວນການກູ້ຊາດ
ລຸກຂຶ້ນຢ່າງເດັດຂາດ    ຮ້ອຍຊັ້ນພັນຫນູນ.
ຫມົດຂະບວນຜູ້ມີບຸນ    ພັດຍັງພໍ່ກະດວດ
ຫມົດຈາກພໍ່ກະດວດ    ພັດອົງແກ້ວກົມມະດຳ
ທັງຂະບວນຄູ ດຳ    ແລະປັດໃຈເຈົ້າຟ້າ
ຮອດຂະບວນຊື່ວ່າ    ຣະນະລາວເປັນລາວ.
ຜ່ານໄລຍະໄກຍາວ    ຮອດລາວອິດສະຫລະ
ລາຊະວົງ ໄດ້ເດີນທາງເຂົ້າພາວະ    ສົດຕະວັດທີຊາວ
ການຕໍ່ສູ້ເພື່ອຈະຟື້ນຟູລາວ    ໄດ້ກ້າວຂຶ້ນສັງກາດໃຫມ່
ນະທາປະຕິວັດຍຸກສະໄຫມຍິ່ງໃຫ່ຍ    ແຫ່ງເດືອນຕຸລາ.
ຢູ່ປະເທດລັດເຊຍ ໄດ້ສ່ອງແສງເຂົ້າມາສົ່ງຜົນສະທ້ອນ
ຫມາຍຄວາມວ່າ, ລາວໄດ້ກ້າວຮອດບ່ອນ    ສະວ່າງແຈ້ງແສງໃສ
ບ່ອນພຶດວງຕາໄຟ    ຍຸກສະໄຫມເບືອງໂລກ
ເບືອງໃຫ້ຄືນພົ້ນໂສກ    ສາລະທຸກຍຸກເຂັນ
ຍາມກາງຄືນກໍ່ເຫັນ    ກາງເວັນກໍ່ແຈ້ງ
ນັ້ນແມ່ນຕາໄຟແຫ່ງ    ລັດທິມາກ-ເລນິນ
ເປັນປັດໃຈຕັດສິນ    ໄຊຊະນະເດັດຂາດ

ເມື່ອເບິ່ງຄືນປະຫວັດສາດ ແຈ້ງຄັກອີຫລີ.

ມາຮອດປີ ພັນເກົ້າຮ້ອຍສີ່ສິບຫ້າ

ລາຊະວົງ ໄດ້ທ່າ ເຕົ້າຕື່ນຄວາມແຮງ

ສົງຄາມໂລກຄັ້ງທີສອງ ເວລາກອງທັບແດງ ສະຫະພາບໂຊວຽດ

ໄດ້ສັບມ້າງລະອຽດ ຟັດຊິດເຢັຍລະມັນ.

ລາວກໍ່ພ້ອມໃຈກັນ ຢຶດເອົາອຳນາດ

ພາກັນຊັກທຸງຊາດ ຂຶ້ນສູ່ປາຍເສົາ

ທຸງຊາດໃໝ່ລາວເຮົາ ຂອບແດງກາງຄາມ

ຈັນເພັງຂາວຢູ່ຍ່ານ ທ້ອງຟ້າສີຄາມ.

ປິວສະບັດວົງງາມ ສ່ອງແສງແຫ່ງຊາດ

ປະກາດເອກະລາດ ໃນວັນທີ 12

ຕຸລາຄົນສົມປອງ ປາຖະໜາໝາຍໄວ້

ເປັນປະຫວັດຍິ່ງໃຫຍ່ ໄຊຊະນະມະຫາສານ.

ເພາະວ່ານັ້ນເປັນການ ໄຂທາງເປີດສາກ

ໃຫ້ແກ່ການປະຕິວັດຊາດ ປະຊາທິປະໄຕ

ນັບແຕ່ນັ້ນ ການຕໍ່ສູ້ຈຶ່ງມີສອງເນື້ອໃນ ຄວາມໝາຍປະຫວັດ ສາດ

ມີທັງເນື້ອໃນຊາດ ແລະເນື້ອໃນສາກົນ.

ອັນເປັນການປະສົມ ລະຫວ່າງສອງມູນທາດ

ທາດໜຶ່ງ ແມ່ນຂະບວນກູ້ຊາດ ບໍ່ຍອມຈຳນົນ

ທາດທີສອງແມ່ນລັດທິສາກົນ ມີແນວທາງມີພັກ

ທີ່ຖືລັດທິມາກ- ເລນິນສ່ອງແສງໃສ.

ບັນຫານີ້ໃຜກໍຄົງເຂົ້າໃຈ ຄວາມຈິງປະຫວັດສາດ

ໃນສະໄໝລາວອິດສະລະກູ້ຊາດ ຕ້ານຝະລັ່ງຮຸກຮານ
ລາວມີກອງທະຫານ ທີ່ນຳພາໂດຍພັກ
ອັນເປັນສັນຍະລັກ ແມ່ນກອງລາຊະວົງ

ໂດຍສະຫາຍເລຂາທິການໃຫຍ່ ໄກສອນພົມວິຫານ ບັນຊາ
ໂດຍກົງ, ເປັນໜັດໄຟນ້ອຍໆ
ກ້າວຂຶ້ນມາເປັນກອງທັບປົດປ່ອຍ ປະຈັກແຈ້ງແຖວໃສ
ບໍ່ວ່າສິ່ງອັນໃດ ຕ້ອງມີກົກມີເຄົ້າ
ໃໝ່ຕ້ອງມາຈາກເກົ່າ ບໍ່ແຍກຫ່າງກັນໄກ.

ສີດຈະຫຳຍຸກສະໄໝເໝືອນກະແສນ້ຳໃສ ໄຫລມາຈາກປາກບໍ່
ໄຫລ ມາຕາມທາງທີ່ ຫ້ວຍແກ້ວເລີນ
ຈາກຖ້ຳເພັດພາທິນ ພູສູງກາກນາກ
ນັ້ນແມ່ນສັນຍະລັກ ຕິດນ້ຳປະຈຳຖິ່ນ.

ແມ່ນສະຫາຍໂຮຈິມິນ ເປັນຜູ້ໝາຍສັນຍະລັກ
ເປັນຜູ້ສ້າງຕັ້ງພັກ ກອມມູນິດອິນດູຈີນ
ນ້ຳຫ້ວຍແກ້ວເລີນ, ໃຜໄດ້ອາບໄດ້ກິນ ບໍ່ລືມຄຸນບ້ານ "ປາກບໍ່"
ພັກປະຊາຊົນປະຕິວັດລາວ, ເສີມຂະຫຍາຍສືບຕໍ່ ປະສົມສອງປັດໃຈ

ສີດຈະຫຳຍຸກສະໄໝ ຍອດວິທະຍາສາດ
ກັບລັດທິຮັກຊາດ ຈິດໃຈລາຊະວົງ
ປະກອບກັນເປັນພື້ນຖານໝັ້ນຄົງ ເຂັ້ມແຂງເດັດຂາດ
ມີກຳລັງອຳນາດ ເປັນອາວຸດອະຈິນໄຕ.

ທີ່ບໍ່ມີສັດຕູໃດ ຈະເອົາໄຊຊະນະໄດ້
ນັບຕັ້ງແຕ່ອາເມລິການາຍໃຫຍ່ ໂຈນຝະລັ່ງກໍ່ເໝືອນກັນ

ໃຜກໍພໍໃຜມັນ ສຸດທີ່ຫ້ຽມໂຫດ
ໂດຍສະເພາະແມ່ນເສດຖີຮົ້ງໂຫດ ໂຈນອາເມລິກາ.

ເບິງມັນຂົນກັນມາຂົນທັງເງິນໂດລາ ທັງຄົນທັງອາວຸດ
ຫວັງໃຫ້ລາວມອດມຸດ ລູກລະເບີດມັນໂຍນ
ຫມົດໄປສາມລ້ານໂຕນ ຕາມເລກປະກາດ
ຫມົດອາວຸດຍຸດທະສາດ ເບ້ຫາສິບສອງ

ແອບ 105 ຣາແຍ ຣິດອບເຕີດອບແຕ ນັບບໍ່ແພ້ບໍ່ຖອງຕັ້ງຮ້ອຍ
ຊັ້ນພັນຢອງຍັງບໍ່ເປັນຢາຍຢອດ
ຜົນສຸດທ້າຍກໍ່ພາກັນໄປຣອດ ບ່ອນວ່າກູດບາຍ! ໂກແບັກກູດບາຍ!
ຫມົດທັງແຫລ້ງທັງນາຍ ໄດ້ເອົາມື້ງມວ່ອນ
ທັນໃດນັ້ນສາມບາດຄ້ອນຍຸດທະສາດລາວປ່ອນ ຢ່າງທັນເວລາ.

ຄ້ອນທີຫນຶ່ງນັ້ນແມ່ນຄ້ອນບັນດາກອງກຳລັງຣັກຊາດ
ໃຊ້ຖານະບິດບາດ ຫມູນຫນິບບັນຊາ
ຄ້ອນທີສອງກອງທະຫານຝ່າຍຂວາ ພ້ອມກັນລຸກຂຶ້ນສູ້
ເປັນກອງຫມວດກອງຫມູ່ ກອງຮ້ອຍກອງພັນ.

ຄ້ອນທີສາມປະຊາຊົນພ້ອມກັນ ຕະລຸມບອນບຸກຫນ້າ
ປານວ່າໄຟໄຫມ້ປ່າ ເບິງຫມາຈອກຫມາໃນ
ກະຕ່າຍຕື່ນດິນໄຫວ ໂລດບີ້ນທີ່ຈ້ຽງ
ພາກັນໂດດຂ້າມຝັ່ງ ຂຶ້ນຂາດເປັນສາຍ !

ສາມບາດຄ້ອນໄດ້ຂີດຫມາຍ ໄລຍະທາງປະຫວັດສາດ
ສຳເລັດຫນ້າທີ່ຊາດ ປະຊາທິປະໄຕ
ພ້ອມກັນນັ້ນສາມບາດຄ້ອນໄດ້ເປີດໄຂ ປະຕູໄຊປະຫວັດສາດ

ປະຕູປ່ອງກັນຊາດ ລ້າງສັງຄົມນິຍົມ.
ເປັນໜ້າທີ່ອັນເໝາະສົມ ອຸດົມການກວມຮອບ
ເພື່ອຈະສ້າງລະບອບ ໝົດທັງຊາດປາຖະໜາ
ວັນທີ 2 ທັນວາ ປີພັນເກົ້າຮ້ອຍ
ເຈັດສິບຫ້າປົດປ່ອຍ ຢ່າງສະຫງ່າລາສີ
ຍຶດອຳນາດໂດຍສັນຕິວິທີ ອາໄສສານບາດຄ້ອນ
ບໍ່ເຄີຍມີມາກ່ອນ ໃນໂລກໂລກາ
ນັ້ນກໍ່ຍ້ອນອາໄສຄວາມປັຊາ ສາມາດຂອງພັກ
ປະຊາຊົນປະຕິວັດ ລາວສະຫລາດແຫລມຄົມ
ຮູ້ຈັດຕັ້ງລະດົມ,ຮູ້ປະກອບປະສົມ ມູນເຊື້ອຮັກຊາດ
ເຂົ້າກັບວິທະຍາສາດ ສົດຈະທຳຍຸກສະໄໝ
ທັງຮູ້ອົງອາໄສ ເທສະແລະກາລະ
ການປະຕິວັດຢູ່ຫວ່ອງດານາມກໍ່ຊະນະ ກຳພູຊາກໍ່ມີໄຊ.
ສະພາບການນອກໃນ ເໝາະສົມຖືກມັຍ !
ລາວກໍ່ຮີບປຸບປັບ ! ຈັບໂອກາດທັນທີ
ໂອກາດດີພັນປີ ກໍ່ຈະມີບາງຄັ້ງ
ພັກໄດ້ອອກຄຳສັ່ງ ຍຶດອຳນາດທັນການ
ປະຊາຊົນແລະທະຫານ ນັບແຕ່ເໜືອສຸດໃຕ້
ພາກັນຕັ້ງປຸມໃຫ່ຍ ມະຫາຊາດບໍ່ປຸມປານ
ຊາວຜູ້ອອກແຮງງານ ຍາດໄດ້ສິດເປັນເຈົ້າ
ຈື່ງເພັນມີຄຳເວົ້າ ວ່າ": ປ່ນຜ້າຫງາຍດິນ".
ເວົ້າເຖິງການຕັດສິນ ຕົກລົງໃຈຍຶດອຳນາດ

ຄົນບໍ່ຖືກໂອກາດ ຫລຸດລື່ນເວລາ
ກໍ່ແມ່ນເປັນບັນຫາ ອັນຕະລາຍຫລັ້ງເລືອດ
ເປັນບັນຫາຮ້ອນເດືອດ ບໍ່ແມ່ນມ່ວນປາງບຸນ
ເພາະສະນັ້ນບຸນຄຸນ ຄວາມດີຂອງພັກ
ປະຊາຊົນເຫັນຄັກ ເຊື່ອຫມັ້ນຕາຍໃຈ
ພ້ອມກັນນັ້ນ ກໍ່ເຫັນຄຸນຍຸກສະໄຫມ ຄຸນຈິດໃຈຮັກຊາດ
ອັນສະຫວ່າງອົງອາດ ມູນເຊື້ອລາຊະວົງ.
ສາມບັນຫາເຊື່ອມຍົງ ຕິດພັນກັນຄັກ
ສົມມຸດວ່າມີພັກ ມີຍຸກສະໄຫມ
ຄົນບໍ່ມີຈິດໃຈ ລາຊະວົງກໍ່ແລ້ວຊາດ
ແມ່ນບໍ່ອາດສາມາດ ຈະຍາດໄດ້ພໍໄຊ.
ຜູ້ໃດມີຈິດໃຈ ຮັກເຊື້ອແພງຊາດ
ຜູ້ນັ້ນຈິ່ງສາມາດ ຕອບຮັບສັດຈະທຳ
ສັດຈະທຳຍຸກສະໄຫມ ໄປນຳ ຄວາມຮັກປະເທດຊາດ
ມັກເປັນເອກະລາດ ເປັນເຈົ້າຕົນເອງ.
ພ້ອມກັນນັ້ນກໍແລເລັງເຫັນ ຈິດໃຈເພື່ອນມິດ
ຄົນແນວນັ້ນຈິ່ງສາມາດເຂົ້າໄປຢູ່ໃກ້ຊິດ ລັດທິມາກ-ເລນິນ
ນີ້ແຫລະ ບ່ອນຕັດສິນ ໃຫ້ທຸກຄົນເຫັນແຈ້ງ
ໃຜບໍ່ແພງກົກເຄົ້າ ໄປມົວເມົານຳແຕ່ງ່າ.
ແມ່ນເຫັນໃຫມ່ມັກຫນ້າ ລືມຮູ້ເກົ່າຫລັງ
ຈັ່ງວ່າຂໍ່ຕ່າວຕັ້ງ ຄືນເບິ່ງບ່ອນກາຍມາ-ກ່ອນເນີ!
ບ່ອນບັນຫາມີຍາຍ ລາຊະວົງເປັນເຈົ້າ

ບັນທາດດຽວມີສາມເປົ້າ ຕີນແດງລົ້ນກ່ານ.
ຜູ້ມີແຂນເປັນໜ້າຢ້ານ ຍາວສັ້ນນັ້ນແມ່ນໃຜ?
ກ່ອນຈິເວົ້າຕ້ອງໄດ້ ຫລຽວຂຶ້ນເບິ່ງປາຍເສົາ–ກ່ອນເນີ!
ທຸງຊາດເຮົາມີສາມສີ ໃຫ້ຈື່ຈຳແຈ້ງ
ຕີນເຊີງແດງສອງກ້ຳ ຂາວກາງແມ່ນລົ້ນກ່ານ.

ສ່ວນທີສາມແມ່ນຂຽວຄາມເຮຽກວ່າສີທ້ອງຟ້າ ສູງລ້ຳສຳດາວ
ຈຶ່ງວ່າຂໍແນະນຳວ່າລົ້ນກ່ານນັ້ນແມ່ນນາງຫ້າວ ຜູ້ສາວຊາດສືໄລ
ດວງພະຈັນຂາວໃສ ຮຸ່ງເຮືອງປະເທືອງແຈ້ງ
ຂໍແນະນຳວ່າຕີນແດງນັ້ນແມ່ນຄົນແຂງກ້າ ຜູ້ປົກປັກປະເທດຊາດ
ສີດຈະທຳຍຸກສະໄໝທ່ຽງໜັ້ນ ບໍ່ມີຢ້ານຍ້ອນຫຍັງ
ຂໍແນະນຳວ່າຜູ້ແຂນສັ້ນຍາວນັ້ນ ໝາຍວ່າປະຊາຊົນ
ຍ້ອນເພີ່ນມີຫລາຍຄົນ ເພີ່ນຈຶ່ງແຂນເປັນແນວນັ້ນ!
ແຂນສັ້ນ–ຍາວ! ເຍົາວະຊົນແມ່ນແຂນສັ້ນ ແຂນຍາວແມ່ນຜູ້ໃຫຍ່
ສາມລ້ານຄົນຫົກລ້ານແຂນນັບໄດ້ ຍາວສັ້ນບໍ່ຄ່າກັນ
ແຕ່ວ່າແຂນເລົ່ານັ້ນ ປະສານຮ່ວມສາມັກຄີ
ເໝືອນກາຍຍະອິນຊີ ແຫ່ງຜູ້ດຽວເດີນເຕົ້າ
ແຂນສັ້ນຍາວເພີ່ນໄດ້ກາຍເປັນເຈົ້າ ປົກປັກແລະສ້າງຊາດ
ເພີ່ນມີສິດອຳນາດເປັນສີຄາມຂອບຟ້າ ສູງລ້ຳບໍ່ຕ່ຳໃຜ
ເພີ່ນໄປຮຽນເອົາໄດ້ ວິຊາໃຫຍ່ທັນສະໄໝ
ນຳລື້ສີຕາໄຟ ຍຸກສະໄໝແສງກ້າ
ຢູ່ທີ່ເມືອງລາວຫລ້າ ນະຄອນສີສັດຕະນາກ
ຍ້ອນວ່າເອົານາມນາກຈຶ່ງວ່າເມືອງຫລ້ານກ້ຳ ເປັນຄຳເວົ້າບໍ່ອຽງບັງ

ຜູ້ມີຊື່ສຽງດັງ 5 ທະວີບຍົກຍ້ອງ ລຶສີໃຫ່ຍຕາໄຟ
ລັດທິມາກ-ເລນິນ ສັດຈະທຳຍຸກສະໄໝ ຈຶ່ງແມ່ນຕາໄຟແຈ້ງ
ແຮງງານເປັນນາງຟ້າ ກາລະເວລາເປັນເຄືອຫູກ
ຊາວວາແມ່ນບາດກ້າວ ຂະຫຍາຍຂື້ນຍຸກສະໄໝ
ເຈັດວັນໄວວຽນອ້ອມ ວາໃຫ່ຍສັດຕະວັດ
ເວລາໃດພືນຟັດຕ່ຳຫູກເຖິງຊາວວາ ລາຊະວົງຈະຄືນບ້ານ
ຄືນບູຮານວອນໄຫ້ວ ກະທຳບຸນເວັ້ນບາບ
ປະຖະຫມາຕໍ້ຕານ ຢູ່ຄຽງຂ້າງລາຊະວົງ
ເວົ້າໂດຍກົງບໍ່ໄດ້ ພວກນັກປາດບັນດິດ
ເພິນຈິງພາກັນຄິດ ຄິດໄຟຟັນມືນຕາ ຕໍ່ມາຈິງມີແທ້
ລາຊະວົງໄດ້ກັບຄືນມາແກ້ ບັນຫາລາວກ້າວຜ່ານ
ສາມສິບປີຕໍ່ຕ້ານ ງານປານແຕ້ມ ເທບນິຍາຍ-ເຈົ້າ
ເອີຍ!
ຕໍ່ຈາກນັ້ນໄດ້ປ່ຽນຍ້າຍ ຂື້ນສູ່ອຸດົມການ
ອັນວິຈິດພິດສະດານ ອົມນະໂຫໂອລານ ລື່ນຫລັງຫລາຍຊັ້ນ
ຈົນສະຫວັນເນືອງຟ້າ ລະອາອາຍລາວໃຫ່ມ.
ຍົກໂປ້ມືບອກໃຫ້ ສະຫວັນຟ້າບໍ່ທີ່ລາວ-ແທ້ແລ້ວ!
ສານສະຫາຍນາງທ້າວ ລົ້ນກ່ານປະສານແສງ
ຕົນແດງໂຮມພະລັງແຮງ ແຂ່ງກັນເດີນກ້າວ
ແຂນສັ້ນຍາວຖືຈົກຊ້ວານ ຂວານສຽມສອນດາບ.
ເອກະພາບທຸກດ້ານ ທະຍານຂື້ນສູ່ສະຫນາມ
ໃນແນວຣົບທຸກດ້ານ ປ້ອງກັນຊາດ, ການຜະລິດ

ວັດທະນະທຳແນວຄິດ, ເສດຖະກິດການເມືອງ ແມ່ນແຕ່ແຂນຍາວສັ້ນ ແຂນສັ້ນຍາວ ຮັບປະກັນເປັນເສົາຄ້ຳ ຄືງຕົວຕັ້ງທ່າ.

ສັດຕູມາຫມື່ນບັກ! ອຸປະສັກຫມື່ນຈຸ້ນ! ຈິ່ຟັນມ້າງໃຫ້ມຸ່ນພັງ!

ຈິເດີນກົງເດີນກ້າວ　　ກັ້ງຮື່ມພະຈັນເພັງ<br>
ຍາມກາງເວັນພະຈັນຂາວ　　ກາງຄືນມາພະຈັນພາວ<br>
ສ່ອງແສງໃສແວວວາວ　　ກ່ອນດາວຢູ່ເທິງຟ້າ.

ແຂນສັ້ນຍາວຈະຮັກສາ, ແຂນສັ້ນຍາວຈະເສີມສ້າງ　　ພະຈັນ<br>
ລາວໃຫ້ຂາວຜ່ອງ<br>
ໃຫ້ໂລກຊຶມຊື່ນຍ້ອງ　　ແນມຈ້ອງເບິງພະຈັນ-ແທ້ແລ້ວ%

# ໄຂປັນຫາ

*ໝາຈອກຖ່າຍ*
*ກະຕ່າຍຂອບ*

ຟັງກ່ອນ! ຟັງກ່ອນ ຟັງເລື່ອງນິຍາຍ
ເວົ້າເຖິງຄວາມໝາຍ ປະຫວັດສາດລາວ-ໄທ
ເນື້ອໃນພົວພັນ ວຽງຈັນບາງກອກ
ນິຍາຍເລື່ອງໝາຈອກ ໃຈບາບວາຈາບຸນ.
ການກະທຳທາລຸນ ໂຫດຮ້າຍທາລຸນ
ມັນມີລູກສະໝຸນ ຄືວປະຈົບປະແຈງ
ອອກແຮງຮັບໃຊ້ນາຍ ຢ່າງຫລິ້ນຫົວຈື່ນທ້າຍ
ຫລິ້ນທ້າຍຈື່ນຫົວ ຈີນລີ້ນຊາດລີ້ນຄືວ
ລືມລີ້ນລືມຕາຍໝັ້ນ ເພີ່ນເອີ້ນວ່າກະຕ່າຍຕອຍຢອຍຕົ້ນ! ຕອຍ
ຢອຍຕົ້ນ!!!

×

× ×

ບັດນີ້ຈັກກ່າວເລື່ອງ ປະຫວັດສາດລາວ-ໄທ
ມັນພົວພັນກັນແນວໃດ ຊິໄລ່ເກນລົງຕັ້ງ
ນັບຄືນຫລັງ ແຕ່ໜຶ່ງເຖິງສອງຮ້ອຍ ປີປາຍປະຫວັດສາດ-ນາພູມ
ນັ້ນແມ່ນສີກກະຫລາດ ປະເທດຊາດເກົ່າຕ້ອຍ ເປັນຂ້ອຍໝູ່ມານ.
ໄພພິບັດຮອບດ້ານ ບູຮານກ່າວສັນຍາລັກ
ວ່າຈະມີມະຫາຍັກ ໃຫ່ຍໂມໂຕຮ້າຍ
ມາທຳລາຍເມືອງບ້ານ ກິນທັງຄົນກິນທັງຊາດ

ວ່າພະຍາທຳມິກກະລາດຊຶມາປາບຍັກຮ້າຍ ພາຍຊ້ອຍເມື່ອລຸນ
ນັ້ນແມ່ນເລື່ອງອະດີດຄາວກ່ອນພຸ້ນ ມະຫາຍັກມາປະກົດ
ແຕ່ກ່າວເປັນອະນາຄົດ ເພື່ອບັງລະຫັດໄວ້
ຄົນບໍ່ບັງລະຫັດໄດ້ ຟຸ້ງໂຈນໃຈບາບ
ມັນຊິປາບປັ້ນປີ້ ບໍ່ຍ່ອມໃຫ້ຂ່າວຂະຫຍາຍ
ເພິ່ນວ່າຍັກໂຫດຮ້າຍ ມາຈາກຕາເວັນຕົກ
ຂ້າມມະຫາອຸທົກ ຜ່ານທະເລເດີນດັ້ນ
ສ່ວນວ່າພະຍາທຳມິກກະລາດນັ້ນ ມາທາງຕາເວັນອອກ
ແຕ່ບໍ່ບອກວ່າຂ້າມ ດິນນ້ຳແຫ່ງໃດ.
ບໍ່ເວົ້າໄກບໍ່ວ່າໃກ້ ພຽງແຕ່ກ່າວເປັນນິຍາຍ
ເປັນທຳນອງທຳນາຍ ສະພາບການພາຍໜ້າ
ແຕ່ຄວາມຈິງສິ່ງທີ່ເຫັນມາແລ້ວ ທຳນາຍມັນກາຍວ່າ! ກາຍວ່າ!
ຫວາຍຄືນຫລັງມັນໂລດຖືກແຕ່ຟ້າ ບໍ່ຄາຄ້າງຢ່າງໃດ.
ດັ່ງນັ້ນ, ເມື່ອສົມທຽບໃສ່ໃນ ເຫດການປະຫວັດສາດ
ນັບແຕ່ສັກກະຫລາດ ພັນທີກ້ອຍປາຍ
ຈັກກະພັດໄດ້ເລີ່ມຕົ້ນຂະຫຍາຍ ຍາດຫົວເມືອງຂຶ້ນ
ທັງກະນິດອື່ນໆ ຟາດຟັດກັດກັນ.
ມາຈາກເບື້ອງຕາວັນ ອັດສະດົງປະເທດ
ນັບແຕ່ປີຖູເກດ ແລະໂຮລັນດາ
ໃນເວລາຕໍ່ມາ ແມ່ນອັງກິດກັບຟະລັ່ງ
ຮອດຍີ່ປຸ່ນຈີນກະທັງ ຈັກກະພັດເມລິກາ.
ພວກທີ່ໄປຊອກຫາ ຮຸກຮານພາຍນອກ

ເພີ່ນເອີ້ນວ່າໝາຈອກ        ໂຈນໃຫ່ຍອັນຕະລາຍ
ຢູ່ໃນເລື່ອງນິຍາຍ, ຫລືພຸດທະທຳນາຍ   ເພີ່ນເອີ້ນວ່າມະຫາຍັກ
ພິດຖືກກັນຕັກ        ປານດ້ອນຕີນ!

ເມື່ອເອົາປະຫວັດສາດມາສົມທຽບຕັດສິນ   ເຫັນຈິງຈະແຈ້ງ
ເນື່ອງຈາກຄວາມຂັດແຍ້ງ        ພາກສ່ວນສັງຄົມ
ບໍ່ລ່ອງຈ່ອງເໝາະສົມ        ສະເໝີກັນກ້າວຂຶ້ນ
ສັງຄົມໂລກ ມີບ່ອນລຸດບ່ອນລື່ນ   ບ່ອນກ້າວຊ້າກ້າວໄວ.

ກ້າວຂຶ້ນສູ່ສະໄໝ        ເມດໄຕອາລິຍະ
ໃນເວລາທີທະວີບອາເຊຍຍັງຢູ່ໃນພາວະ   ສັງຄົມສັກດີນາ
ແຕ່ທະວີບຢູໂຣບຈ໌ພັດກ້າວຂຶ້ນຫາ   ນາຍທຶນຜູກຂາດ
ເປັນຜູ້ສວມອຳນາດ        ແຫ່ງລັດພະເດັດການ.

ມີທາດແທ້ຮຸກຮານ        ກາຍເປັນຈັກກະພັດ
ໄປຫາປຸ້ນຫາລັກ        ຂະຫຍາຍເຂດອານາ
ໃຈໂລບມາກໂລພາ        ຢາກເປັນຈອມເປັນໂຈກ
ຈຶ່ງໄດ້ກໍ່ເສິກໂລກ        ມາສອງສະໄໝ

ສ້າງມະຫັນຕະໄພ        ໃຫ້ແກ່ມວນມະນຸດຊາດ
ເມື່ອຂະຫຍາຍອຳນາດ        ມາທາງອາເຊຍ
ນັບຕັ້ງແຕ່ປະເທດຈີນກໍ່ບໍ່ເຫລືອ   ສັກດີນາໂຕເດີບ
ກໍ້ລ້ວນແຕ່ ຕົກຢູ່ໃຕ້ພື້ນເກີບ        ຈັກກະພັດ   ຕາມໆກັນ.

ພວກເຂົາໄດ້ແບ່ງປັນ        ກັນຄອງອຳນາດ
ພ້ອມທັງກັດທັງຟາດ        ຍາດແຍ່ງກັນກິນ
ໂດຍສະເພາະຢ່າງຍິ່ງແມ່ນສອງອັກສະອິນ   ອັງກິດກັບຝະລັ່ງ

ສອງເສດຖີນີ້ ຍາດກັນຄ້າຢາຢາງ.

ຍົກຕົວຢ່າງ, ຍາດກັນຄ້າຢູ່ທາງ ປະເທດຈີນແດນຖິ່ນ
ໃນປີ 1845 ຈີນວ່າເກີດເສິກຝິ່ນ ຊື່ວ້າຊາລີຊາ
ໃນຄາວນັ້ນ ເພິ່ນວ່າເສິກຂີ້ຢາ ຄົນຕາຍບໍ່ແມ່ນງ່າຍ
ຕາຍເປັນກອງເປັນກ່າຍ ຍ້ອນຍາດເຮໂລອີນ.

ບາງຄົນຕາຍທັງກິນ ຍັງຄາບກອກເກິງເດິງ
ໃນເມື່ອຫັນມາເບິງ ອາຊີອາຄະເນ
ກ່ຽວກັບລາວ- ໄທເດ? ກະບໍ່ຕ່າງກັນດອກ
ບໍ່ອາດແຍກຕົວອອກ ຈາກສະພາບທົ່ວໄປ.

ຢູ່ເມືອງລາວເມືອງໄທ ຈັກກະພັດເຄື່ອນໄຫວ ມາໃນຮູບແບບ
ໃຊ້ດ້ວຍເບັດສາຍແລບ ເບັດຫລ້ອນເລືອນຕາ
ກ່ອນອື່ນໝົດ ຕຶກເອົາສັກດີນາ ແລະນາຍທຶນຈຳໜ່າຍ
ໃຊ້ສິນຄ້າແຈກຈ່າຍ ເປັນເຄື່ອງບັນນາການ.

ໃຊ້ທາງສາດສະໜາເອົາໃຈບຸນສຸນທານ ເປັນຢາຫອມຫວ່ານ
ອ້ອມ
ໃຊ້ພໍ້ຄາຊຸມອາເສັຍປົດລ້ອມ ຊຸນເສິກສັກດີນາ
ໃຫ້ຟັງຄຳບັນຊາ ຂອງຈັກກະພັດ
ເສດຖະກິດຜູກມັດ ແບ່ງແຍກພາຍໃນ.

ສັກດີນາລາວ- ໄທ ມືດຕາມົວໜ້າ
ໄດ້ແຂ່ງຂັນກັນວ່າ "ຂໍຍອມຈຳນົນ"
ເຖິງວ່າມີບຸກຄົນ ສັກດີນາຜູ້ຮັກຊາດ
ຕັດສິນໃຈເດັດຂາດ ເຂົ້າຝ່າຍປະຊາຊົນ

ເພິ່ນບໍ່ຍອມຈຳນົນ ໄດ້ທຳການຕໍ່ສູ້
ແຕ່ກໍ່ຖືກພວກໝູ່ ສັກດີນາປະຕິການ
ທີ່ເປັນບໍລິວານ ຈັກກະພັດລ້ອມປາບ
ໃຫ້ເສຍໄຊຣາບຄາບ ປະຫວັດສາດມີມາ.
ເບິ່ງຮູບນອກຄືວ່າສັກດີນາ ແລວກັນຊີງຍາດ
ເປັນໄປຢ່າງຮ້າຍກາດ ກວາດຕ້ອນປະຊາຊົນ
ທັງເຄື່ອງຂອງທັງຄົນ ບໍ່ໃຫ້ຍັງເຫລືອຄ້າງ
ຈົນເປັນບ້ານເມືອງຮ້າງ ກວາດລ້າງເຜົາຜານ.
ນັ້ນແມ່ນປະກົດການ ມີຟ່າຍເສຍຟ່າຍແພ້
ແຕ່ວ່າດ້ານທາດແທ້ ແມ່ນຈັກກະພັດປັນຊາ
ໃຊ້ເລ້ກົນເຮັດໃຫ້ຄົນທຶງສາ ດຽດຊັງລະຫວ່າງຊາດ
ໂດຍບິດບ້ຽວແລະພິກປ້ນປະຫວັດສາດ ຮ້ອຍແປດພັນປະການ.
ພວກເຮົາມີຫລັກຖານ ທ່ຽງທຳຄຳເວົ້າ
ປະຊາຊົນຄົນເຖົ້າ ໄຂ[໑໕]ສະດຊຸບອກ
ເວົ້າອອກເປັນກະທູ້ ວ່າໝາຮ້າຍຖ່າຍເທ
ກະຕ່າຍພິເອ້ເລ້ ທ້ອງໂພ່ນນອນກິນ.
ຈົນວ່າດິນດອນຫລຸບ ຫລື່ນລົງປານສ້າງ
ເພີ່ນວ່າ: "ວຽງຈັນຮ້າງ ເປັນໂພນຂີ້ໝາຈອກ
ບາງກອກຮ້າງ ເປັນໜ້ອງກະຕ່າຍນອນ"
ເວົ້າໃຫ້ກ້ຽງໃຫ້ຫລ້ອນ ກົງໄປກົງມາ.
ພວກລູກແຫລ່ງແຄ່ງຂາ ຕີນມືມານຮ້າຍ
ເພີ່ນເອີ້ນວ່າກະຕ່າຍ ແມ່ນຖືກເປ້າະເໝາະສົມ

ຈັກກະພັດນິຍົມ　　ຮຸກຮານພາຍນອກ
ເພິ່ນເອີ້ນອຳໜາຈອກ　　ຈຶ່ງແມ່ນຄຶກອິຕິລີ!
　　ບ່ອນໃດມີ　　ໂພນສູງຕ້ອງມີໜ້ອງ
ບ່ອນມີໜ້ອງກໍ່ຕ້ອງ　　ມີໂພນໃຫ່ຍຄືກັນ
ຕັ້ງແຕ່ປີໜຶ່ງພັນ　　ເຈັດຮ້ອຍເຈັດສິບແປດ (1778)
ຈັກກະພັດແລະລູກມືອີງແອດ　　ປຸ້ນປາບວຽງຈັນ.
　　ອັນເປັນເມືອງມິ່ງຂວັນ　　ດິນແດນລ້ານຊ້າງ
ທີ່ສວຍງາມເອກອ້າງ　　ປຽບດັ່ງແດນສະຫວັນ
ກໍ່ກາຍເປັນຄືກັນ　　ກັບກຸງເກົ່າຮ້າງ
ຍົກຄືວ່າງ　　ກຸງທະວາລາ...
　　ສີອະຍຸທະຍາ　　ກໍ່ຖືກເຜົາພິນາດ
ຢູ່ໃນໜ້າປະຫວັດສາດ　　ກ່ອນນັ້ນບໍ່ເຄີຍມີ
ນັບເລີ່ມຕົ້ນແຕ່ປີ　　ອັງກິດຝະລັ່ງເສດ
ສະແດງລິດແຜງເດດ　　ບົດບາດເປັນຕົວການ
　　ມາແຊກແຊງຮຸກຮານ　　ເປັນໂຈນປຸ້ນຊາດ
ປຸ້ນເອົາເປັນຕະຫລາດ　　ບ່ອນຈຳໜ່າຍຂາຍຂອງ
ປຸ້ນເອົາເງິນເອົາທອງ　　ຊັບສິນຂອງຊາດ
ປຸ້ນເອົາວິທະຍາສາດ　　ທັງວິຊາການ.
　　ປຸ້ນເອົາທັງແຮງງານ　　ປຸ້ນເຂາະປຸ້ນຂອດ
ຊ້ຳບໍ່ໜຳ ມັນປຸ້ນເອົາຈົນຮອດ　　ແນວຄິດຈິດໃຈ
ນັບແຕ່ນັ້ນລາວ– ໄທ　　ສູນເສຍປະເທດຊາດ
ປະເທດສັກດີນາເດັດຂາດ ຍົມເອກະລາດ ຕໍ່ໜ້ານາຍທຶນ

ຈັກກະພັດໜ້ານິນ　　ສັດຕະວັດທີ 18

ໃຫ້ຜູ້ຄຶດຕິດພາດ　　ກັບຍຸກສະໄໝ

ຈຶ່ງສາມາດເຂົ້າໃຈ　　ຄວາມຈິງນັ້ໄດ້

ຕັ້ງແຕ່ຈີນປະເທດໃຫຍ່　　ສັກດີນາເໜືອຫົວ.

ກໍ້ຕອງຍອມມອບຕົວ　　ເປັນທາດຈັກກະພັດ

ຍອມໃຫ້ມັນຜູກມັດ　　ຈັບຈ່ອງປົກຄອງ

ເປັນຕະຫລາດຂາຍຂອງ　　ຮຽກວ່າ "ຫມ້ອງກະຕ່າຍ"

ເປັນບ່ອນຫມາຈອກຖ່າຍ　　ບ່ອນກະຕ່າຍນອນກິນ

ປະຫວັດສາດຕັດສິນ　　ຄວາມຈິງຂັ້ນ

ຈຶ່ງວ່ານ້ອງແລະພີ່　　ປະຊາຊາດລາວ - ໄທ

ໄດ້ຜ່ານຍຸກສະໄໝ　　ຄວາມຈິງປະຫວັດສາດ

ເມືອງລາວຕົກເປັນທາດ, ໄທກໍ່ເປັນຕະຫລາດ, ເປັນຖານທັບກັບເປັນ
ທາດບໍ່ແຕກຕ່າງກັນຫຍັງ

ໃນຄາວກ່ອນ ເປັນເມືອງຂຶ້ນເມືອງບັງ ອັງກິດ, ຝະລັ່ງເສດ

ຈັກກະພັດເຂົ້າມາປັກປັນເຂດ　　ແລະແບ່ງແຍກປົກຄອງ

ປະຊາຊາດທັງສອງ　　ລາວໄທທຸກຍາກ

ສຸດທີ່ແສນລຳບາກ　　ຕະຫລອດໃຕ້ເຖິງເໜືອ.

ມີແຕ່ເສິກແຕ່ເສືອ　　ບ້ານແຕກແຊກຂາດ

ປະຊາຊົນສອງຊາດ　　ຄຽດແຄ້ນສຸດປະມານ

ໄດ້ລຸກຂຶ້ນ ຕ້ານກັບການຮຸກຮານ　　ຮັກສາຊາດເຊື້ອ

ບໍ່ເຄີຍມີຈັກເທື່ອ　　ຊິວ່າຍອມຈຳນົນ.

ໄດ້ເຄື່ອນໄຫວອົດທົນ　　ທຳການຕໍ່ສູ້

ເພື່ອດຳລົງຄົງຢູ່ ເປັນຊາດສະເໝີມາ
ເວົ້າສະເພາະບັນດາ ດິນແດນລ້ານຊ້າງ
ເຖິງວ່າວຽງຈັນຮ້າງ ມ້າງມຸ່ນໂດຍໄຟ.
ແຕ່ວ່າທາງວຽງໃຈ ຄົນລາວຊ້ຳພັດເວົ້າ
"ເຫັນວ່າວຽງຈັນເສົ້າ ສາວເຣີຍຢ່າຟ້າວວ່າ
ວຽງຈັນລາວ ຍັງຊິໂປ້ບາດຫລ້າ ໝາກແຕງຊ້າງໜ່ວຍປາຍ"
ໝາຍຄວາມວ່າເມືອງວຽງຈັນຈະໃສແຈ້ງ ເປັນເດືອນເພັງ 15ຄ່ຳ
ງາມປະເສີດເລີດລ້ຳ ນະໂມແມ້ນມຸ່ງໝາຍ
ໝາຍຄວາມວ່າ ບໍ່ຍອມຮ້າງບໍ່ຍອມຕາຍ ຕັດສິນເດັດຂາດ
ໄດ້ລຸກຂຶ້ນກູ້ຊາດ ຕ້ານຝະລັ່ງຕໍ່ມາ
ຕ້ານອາເມລິກາ ຫົວໂຈກຈັກກະພັດ.
ໃຕ້ການນຳພາຂອງພັກ ອັນສະງ່າລາສີ
ຕະຫລອດສາມສິບປີ ກຳຄັນທຸງຊາດ
ດວງຈັນຂາວສະອາດ ສອງຂອບແດງງາມ
ພື້ນທ້ອງຟ້າສີຄາມ ເດີນທາງກ້າວໜ້າ
ຈົນໄປຮອດບ່ອນວ່າ ໄຊຊະນະສົມປອງ
ມາດຽວນີ້ ລາວໄດ້ເປັນເຈົ້າຂອງ ປົກຄອງປະເທດຊາດ
ໄດ້ມີສິດອຳນາດ ອະທິປະໄຕ
ພ້ອມກັນຕັດສິນໃຈ ສ້າງລາວໃຫ້ກ້າວໜ້າ.
ໃຫ້ຮຸ່ງເຮືອງສົມວ່າ ລາວໃໝ່ພະຈັນເພັງ
ໃຈຟົດຟື້ນຄືນເຄັ່ງ ຮ່ວມກັນບຸກໜ້າ
ແກ້ບັນຫາຮອຍຮ້າງ ກອງໂພນຂີ້ໝາຈອກ

ໄລ່ໝາຈອກອອກແລ້ວ ປັດແຜ້ວຢ່າງດີ.

ເປັນຕົ້ນວ່າ ປັດຂີ້ ລັກ, ໂລບໂລພາ...

ທຸກອາຈົມຂອງໝາ ຈອກໂຈນບໍ່ເອົາໄວ້

ຂອງອັນໃດເປິເປື້ອນ ຄືນເຮົາແໜງໜ່າຍ

ຂອງກະຕ່າຍບໍ່ປີ້ນ ຈິເປັນກ້ອນ...ກໍ່ບໍ່ດີ.

ສອງຮ້ອຍປີກ່ອນກີ້ ມາຮອດປະຈຸບັນ

ຄຶດຄະນຶງຄືນຫລັງ ຄັ່ງໃຈຈົນແຄ້ນ

ດຽວນີ້ມາເຖິງແປ້ນ ເປິງສະໄໝມິດຕະພາບ

ສັນຕິພາບແຜ່ກວ້າງ ຂະຫຍາຍກ້າວຍິ່ງທະວີ.

ແຕ່ວ່າທຸກມື້ນີ້ ໃນພາກຕົວຈິງ

ຄົນບໍ່ດີຜີສາງ ຍັງຮ່ວມກັນຝັນເຟີ້

ຍັງລະເມີດໝາຍມ້າງ ແມ່ຂອງສັນຕິພາບ

ປະຊາຊົນສອງຊາດຈະປະໝາດບໍ່ໄດ້ ລະວັງໄວ້ຢ່າງດີ.

ສານັກຄິດຂອດໝັ້ນ ມິດຕະພາບລາວ-ໄທ

ເພີ່ມທະວີຈິດໃຈ ສ່ອງໃສເປັນເຈົ້າ

ບໍ່ຫລົງລືມຄວາມເວົ້າ ບູຮານເຮົາເຕືອນບອກ

ແກ້ບັນຫາໝາຈອກ! ບັນຫາໂພນເຮີ້ຮາຍ! ບັນຫາໝ້ອງກະຕ່າຍນອນ

ບັນຫາຝັນກັບນອນ! ເໝືອນດັ່ງໃນນິຍາຍ!

ກາຍເກີດເປັນກອງຮ້ອນ ໝາກຕຸ່ມຄຳໂຄບຫລື່ນ!

ກະຕ່າຍໂຕນຕື່ນກົ້ນ ! "ດິນປົ້ນ" ເບິ່ງບໍ່ເປັນ! ແທ້ແລ້ວ.

# ສາລະບານ


| | ໜ້າ |
|---|---|
| * ຍ່າງສອງຂາເອົາຕາໄປກ່ອນ | 1–15 |
| * ແດນລາວບໍ່ລືມເຕົ້າ | 16–21 |
| * ກົ້ງຣື່ມແລະຈັນເພັງ | 22–36 |
| * ໄຂບັນຫາໝາຈອກຖ່າຍກະຕ່າຍນອນ | 37–45 |